ຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ກາຣກະທຳຂອງນາງນັ້ນ ເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເລື່ອມໃສແລ້ວ.

[໑໔໗] ພຣະຜູ້ມີພຣະກາຄທຮົງຕິຕຽນກິກຂຸຕີຖຸລລນັນທາ ໂດຍອເນກປຣິຢາຍດັ່ງນີ້ແລ້ວ ທຮົງກະທຳທັມມີກະຖາອັນສົມຄວຣແກ່ເຣື່ອງນັ້ນ ອັນເຫມາະສົມແກ່ເຣື່ອງນັ້ນແກ່ກິກຂຸທັ້ງຫຼາຍ ແລ້ວຕຣັສລະກັບກິກຂຸທັ້ງຫຼາຍວ່າ

ເຣື່ອງຫົງສ໌ທອງ

ດູຣາກິກຂຸທັ້ງຫຼາຍ ເຣື່ອງເຄີຍມີມາແລ້ວ ກິກຂຸຕີຖຸລລນັນທາໄດ້ເຄີຍເປັນປຊາບໍດີຂອງພຣາຫ໌ມຓ໌ຄົນນຶ່ງ ມີທິດາ ៣ ຄົນ ຊື່ນັນທາ ໑ ນັນທວດີ ໑ ສຸນທຣີນັນທາ ໑ ເມື່ອພຣາຫ໌ມຓ໌ສາມີທຳລາຍຂັນທ໌ໄປບັງເກີດໃນກຳເນີດຫົງສ໌ຕະກູລນຶ່ງ ມີຂົນເປັນທອງທັ້ງຕົວ ຫົງສ໌ນັ້ນສລັດຂົນໃຫ້ແກ່ສຕຣີເຫລົ່ານັ້ນຄົນລະຂົນ ແຕ່ກິກຂຸຕີຖຸລລນັນທາຄຶດວ່າ ຫົງສ໌ຕົວນີ້ສລັດຂົນໃຫ້ແກ່ພວກເຮົາຄົນລະຂົນເທົ່ານັ້ນ ແລ້ວໄດ້ຈັບພຣະຍາຫົງສ໌ນັ້ນຖອນຂົນຈົນກ້ຽງ ຂົນພຣະຍາຫົງສ໌ນັ້ນທີ່ງອກໃຫມ່ໄດ້ກາຍເປັນສີຂາວໄປ.

ດູຣາກິກຂຸທັ້ງຫຼາຍ ຄັ້ງນັ້ນກິກຂຸຕີຖຸລລນັນທາໄດ້ເສື່ອມຈາກທອງເພາະຄວາມໂລກຈັດ ມາບັດນີ້ເສື່ອມຈາກກະທຽມ.

[໑໔໘] ໄດ້ສິ່ງໃດແລ້ວ ຄວຣຍິນດີດ້ວຍສິ່ງນັ້ນ ເພາະຄວາມໂລກຈັດເປັນເຫຕຸໃຫ້ເສື່ອມ ເຫມືອນກິກຂຸຕີຖຸລລນັນທາຈັບພຣະຍາຫົງສ໌ຖອນຂົນແລ້ວ ເສື່ອມຈາກທອງລະນັ້ນ.

[໑໕໐] ພຣະຜູ້ມີພຣະກາຄທຮົງຕິຕຽນກິກຂຸຕີຖຸລລນັນທາ ໂດຍອເນກປຣິຢາຍດັ່ງນີ້ແລ້ວ .. ຕຣັສກັບກິກຂຸທັ້ງຫຼາຍວ່າ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈຶ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນລັຕິ

໕໖. ໑. ອີກຢ່າງ ກິກຂຸນີໃດ ລັນກະທຽມ ເປັນປາຈິຕຕີຍ໌.

ເຣື່ອງກິກຂຸນີຖຸລລນັນທາ ຈົບ.

ສິກຂາບົທວິພັງຄ໌

[໑໕໑] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸນີ ຄວາມວ່າ ທີ່ຊື່ວ່າ ກິກຂຸນີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ກິກຂຸນີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ກະທຽມ ໄດ້ແກ່ ກະທຽມທີ່ເຂົາເອີ້ນກັນວ່າເກີດໃນແຄວ້ນມຄົຮ.

ກິກຂຸນີຮັບປະເຄນດ້ວຍໝາຍໃຈວ່າ ຈະລັນ ຕ້ອງອາບັຕິທຸກກົຝ ກືນກິນ ຕ້ອງອາບັຕິປາຈິຕຕີຍ໌ ທຸກໆ ຄຳກືນ.

ບົທກາຊນີຍ໌

ຕິກະປາຈິຕຕີຍ໌

[໑໕໘] ກະທຽມ ກິກຂຸນີສຳຄັນວ່າກະທຽມ ລັນ ຕ້ອງອາບັຕິປາຈິຕຕີຍ໌

ກະທຽມ ກິກຂຸນີສົງສັຍ ລັນ ຕ້ອງອາບັຕິປາຈິຕຕີຍ໌.

ກະທຽມ ກິກຂຸນີສຳຄັນວ່າບໍ່ແມ່ນກະທຽມ ລັນ ຕ້ອງອາບັຕິປາຈິຕຕີຍ໌.

ທຸກະທຸກກົຝ

ບໍ່ແມ່ນກະທຽມ ກິກຂຸນີສຳຄັນວ່າກະທຽມ ຕ້ອງອາບັຕິທຸກກົຝ.

ບໍ່ແມ່ນກະທຽມ ກິກຂຸນີສົງສັຍ ຕ້ອງອາບັຕິທຸກກົຝ.

ບໍ່ຕ້ອງອາບັຕິ

ບໍ່ແມ່ນກະທຽມ ກິກຂຸນີສຳຄັນວ່າ ບໍ່ແມ່ນກະທຽມ ບໍ່ຕ້ອງອາບັຕິ.

ອນາປັຕຕິວາຣ

[໑໕៦] ກະທຽມເຫລືອງ ໑ ກະທຽມແດງ ໑ ກະທຽມຂຽວ ໑ ກະທຽມຕົ້ນບໍ່ມີເຍື່ອ ໑ ກະທຽມທີ່ປຸງລົງໃນແກງ ໑ ກະທຽມທີ່ປຸງລົງໃນຊີ້ນ ໑ ກະທຽມຈຽວນ້ຳມັນ ໑ ກະທຽມທີ່ປຸງລົງໃນນ້ຳພຸທຣາ ໑ ກະທຽມທີ່ປຸງລົງໃນແກງອ່ອມ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸນວັຄຄ໌ ສິກຂາບົທທີ່ ໑ ຈົບ.

ລສຸຕາວັຄຄ໌ ສິກຂາບົທທີ່ ៨
ເຣື່ອງກິກຂຸຕີຈັພພັຄຄີຍ໌

[໑໕៨] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓ ພຣະເຊຕວັນ ອາຣາມຂອງອນາຖ ບິຓທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ກິກຂຸຕີຈັພພັຄຄີຍ໌ ໃຫ້ຖອນຂົນໃນທີ່ແຄບ ແລ້ວເປືອຍ ກາຍອາບນ້ຳທ່າດຽວກັນກັບລິງແພສຍາ ໃນແມ່ນ້ຳອຈິຣວດີ. ພວກລິງແພສຍາພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີທັ້ງຫຼາຍຈຶ່ງໄດ້ໃຫ້ຖອນຂົນໃນທີ່ແຄບເຫມືອນພວກລິງຄຣືຫັສຖ໌ຜູ້ບໍຣິໂກຄການ ລະ ກິກຂຸຕີທັ້ງຫຼາຍໄດ້ຍິນລິງແພສຍາພວກນັ້ນພາກັນເພ່ງໂທษ ຕິຕຽນ ໂພນທະນາຢູ່. ບັຣດາທີ່ ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີຈັພພັຄຄີຍ໌ຈຶ່ງໄດ້ໃຫ້ຖອນຂົນໃນ ທີ່ແຄບ ...

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າ ກິກຂຸຕີຈັພພັຄຄີຍ໌ ໃຫ້ຖອນຂົນໃນທີ່ແຄບ ແທ້ບໍ່?

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທຣເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນລັຕິສິກຂາບົທ

ພຣະຜູ້ມີພຣະກາຄພຸທຣເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ເປັນຫຍັງກິກຂຸຕີຈັພພັຄຄີຍ໌ຈຶ່ງໄດ້ໃຫ້ ຖອນຂົນໃນທີ່ແຄບລະ ກາຣກະທຳຂອງພວກນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ ເລື່ອມໃສ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັລລັຕິ

໕໗. ៨. ອີກຢ່າງ ກິກຂຸຕີໃດ ໃຫ້ຖອນຂົນໃນທີ່ແຄບ ເປັນປາຈິຕຕີຍ໌.

ເຣື່ອງກິກຂຸຕີຈັພພັຄຄີຍ໌ ຈົບ.

ສິກຂາບົທວິກັງຄ໌

[໑໕໕] ບົທວ່າ ອີກຢ່າງ .. ໃດ ຄວາມວ່າຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ກິກຂຸຕີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ທີ່ແຄບ ໄດ້ແກ່ ຂີ້ແຮ້ທັ້ງສອງ ບໍຣິເວຓຖວາຣເບົາ.

ບົທວ່າ ໃຫ້ຖອນ ຄືໃຫ້ຖອນຂົນແມ້ເສັ້ນດຽວ ຕ້ອງອາບັຕິປາຈິຕຕິຍ໌. ໃຫ້ຖອນຂົນແມ້ຫຼາຍເສັ້ນ ກໍຕ້ອງອາບັຕິປາຈິຕຕິຍ໌.

ອນາປັຕຕິວາຣ

[໑໕໗] ມີເຫຕຸອາພາຣ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຓວັຄຄ໌ ສິກຂາບົທທີ່ ໘ ຈົບ.

ລສຸຕາວັຄຄ໌ ສິກຂາບົທທີ່ ๖

ເຣື່ອງກິກຂຸຕີ ๘ ອົງຄ໌

[໑໕໗] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນ ອາຣາມຂອງອນາຖບິຕຫິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ກິກຂຸຕີ ๘ ອົງຄ໌ອັນຄວາມກະສັນບີບຄັ້ນແລ້ວເຂົ້າຫ້ອງນ້ອຍແລ້ວທຳການສັມຜັສບໍຣິເວຕອົງຄ໌ຣຫັສກັນ. ກິກຂຸຕີທັ້ງຫຼາຍພຣູກັນເຂົ້າມາຕາມສຽງສັມຜັສນັ້ນແລ້ວໄດ້ຖາມສອງກິກຂຸຕີນັ້ນດັ່ງນີ້ວ່າ ຍາແມ່ທັ້ງຫຼາຍ ເຫຕຸເພາະຫຍັງພວກທ່ານຈຶ່ງຮ້າຍບໍ່ດີບໍ່ຮ້າຍກັບບຸຣຸษ.

ກິກຂຸຕີສອງອົງຄ໌ນັ້ນຕອບວ່າ ຍາແມ່ທັ້ງຫຼາຍ ພວກຂ້ານ້ອຍບໍ່ໄດ້ເຮັດບໍ່ດີບໍ່ຮ້າຍກັບບຸຣຸษ ກິກຂຸຕີສອງອົງຄ໌ນັ້ນໄດ້ແຈ້ງເຣື່ອງນັ້ນແກ່ກິກຂຸຕີທັ້ງຫຼາຍ.

ບັຣດາກິກຂຸຕີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີທັ້ງຫຼາຍຈຶ່ງໄດ້ເຮັດການສັມຜັສບໍຣິເວຕອົງຄ໌ຣຫັສກັນລະ ...

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າພວກກິກຂຸຕີທຳການສັມຜັສບໍຣິເວຕອົງຄ໌ຣຫັສກັນ ແທ້ບໍ່?

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັລລັຕິສິກຂາບົທ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ເປັນຫຍັງພວກກິກຂຸຕີຈຶ່ງໄດ້ເຮັດການສັມຜັສບໍຣິເວຕອົງຄ໌ຣຫັສກັນລະ ການກະທຳຂອງພວກນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັລລັຕິ

໕໗. ๖. ເປັນປາຈິຕຕີຍ໌ ໃນເພາະສັມຜັສບໍຣິເວຕອົງຄ໌ຣຫັສ.

ເຣື່ອງກິກຂຸຕີ ๘ ອົງຄ໌ ຈົບ.

ສິກຂາບົທວິກັງຄ໌

[໑໕໗] ທີ່ຊື່ວ່າ ສັມຜັສບໍຣິເວດອົງຄ໌ຣຫັສ ຄື ກິກຂຸຕີຍິນດີສັມຜັສໃຫ້ຕົບທີ່ອົງຄ໌ຣຫັສ ໂດຍທີ່ສຸດແມ້ດ້ວຍກີບບົວ ຕ້ອງອາບັຕິປາຈິຕຕີຍ໌.

ອນາປັຕຕິວາຣ

[໑໕໘] ມີເຫຕຸອາພາຣ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຓວັຄຄ໌ ສິກຂາບົທທີ່ ໓ ຈົບ.

ລສຸນວັຄຄ໌ ສິກຂາບົທທີ່ ໔

ເຣື່ອງພິກຂຸນີອົງຄ໌ນຶ່ງ

[໑໗໐] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓ ພຣະເຊຕວັນ ອາຣາມຂອງອນາຖບິຓທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ມີພຣະສນົມເກົ່າຄົນນຶ່ງບວຊຢູ່ໃນສຳນັກພິກຂຸນີ ພິກຂຸນີອົງຄ໌ນຶ່ງອັນຄວາມກະສັນບີບຄັ້ນແລ້ວ ໄດ້ເຂົ້າໄປຫາພິກຂຸນີພຣະສນົມອົງຄ໌ນັ້ນເຖິງສຳນັກແລ້ວຖາມວ່າ ຍາແມ່ ພຣະຣາຊາສະເດັຈໄປຫາຍາແມ່ນານໆ ຄັ້ງ ຍາແມ່ດຳຣົງຢູ່ໄດ້ດ້ວຍອາການຢ່າງໃດ?

ພິກຂຸນີພຣະສນົມຕອບວ່າ ດ້ວຍທ່ອນຢາງກ້ຽງໆ ຂ້ານ້ອຍ.

ພິກຂຸນີນັ້ນຊັກວ່າ ທ່ອນຢາງກ້ຽງນັ້ນເປັນຢ່າງໃດ?

ຈຶ່ງພິກຂຸນີພຣະສນົມນັ້ນໄດ້ບອກທ່ອນຢາງກ້ຽງແກ່ພິກຂຸນີນັ້ນ ພິກຂຸນີນັ້ນໃຊ້ທ່ອນຢາງກ້ຽງແລ້ວລືມລ້າງວາງຖິ້ມໄວ້ ຓ ທີ່ຂ້າງນຶ່ງ. ພິກຂຸນີທັ້ງຫຼາຍເຫັນທ່ອນຢາງກ້ຽງມີໝູ່ແມງວັນຕອມ ຈຶ່ງເວົ້າເປັນເຊີງຖາມວ່າ ນີ້ການກະທຳຂອງໃຜ?

ພິກຂຸນີນັ້ນກ່າວຕອບຢ່າງນີ້ວ່າ ນີ້ເປັນການກະທຳຂອງຂ້ານ້ອຍ.

ບັຣດາພິກຂຸນີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸນີຈຶ່ງໄດ້ໃຊ້ທ່ອນຢາງກ້ຽງໆ ລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພິກຂຸນີໃຊ້ທ່ອນຢາງກ້ຽງໆ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນລັດຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸນີຈຶ່ງໄດ້ໃຊ້ທ່ອນຢາງກ້ຽງໆ ລະ ການກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ວ່າດັ່ງນີ້:

ພຣະບັນລັດຕິ

໕໙. ໔. ເປັນປາຈິຕຕີຍ໌ ໃນເພາະໃຊ້ທ່ອນຢາງກ້ຽງໆ

ເຣື່ອງພິກຂຸນີອົງຄ໌ນຶ່ງ ຈົບ.

ສິກຂາບົທວິກັງຄ໌

[໑໖໑] ທີ່ຊື່ວ່າ ທ່ອນຢາງກັ່ງໆ ໄດ້ແກ່ ວັຕຖຸທີ່ເຮັດຂຶ້ນດ້ວຍຢາງ ເຮັດຂຶ້ນດ້ວຍໄມ້ ເຮັດຂຶ້ນດ້ວຍແປ້ງ ເຮັດຂຶ້ນດ້ວຍດິນ.

ກິກຂຸຕີຍິນດີສັມຜັສ ສອດວັຕຖຸໂດຍທີ່ສຸດແມ້ກີບອຸບົລ ເຂົ້າໄປສູ່ອົງຄ໌ຣທັສ ຕ້ອງອາບັຕິປາຈິຕຕີຍ໌.

ອນາປັຕຕິວາຣ

[໑໖໘] ມີເຫຕຸອາພາຣ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຓວັຄຄ໌ ສິກຂາບົທທີ່ ໔ ຈົບ.

ລສຸນວັຄຄ໌ ສິກຂາບົທທີ່ ໔

ເຣື່ອງພຣະມຫາປຊາບໍດີໂຄຕມີເຖຣີ

[໑໘໖] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓ ນິໂຄຣຣາຣາມ ເຂຕພຣະນຄຣ ກບິລພັສດຸ໌ ສັກກຊົນບົທ. ຄັ້ງນັ້ນ ພຣະມຫາປຊາບໍດີໂຄຕມີເຖຣີ ເຂົ້າເຝົ້າພຣະຜູ້ມີພຣະພາຄເຖີງພຸທສສຳນັກ ຖວາຍບັງຄົມແລ້ວໄດ້ຢືນເຝົ້າຢູ່ ຓ ທີ່ໃດ້ລົມ ຂາບທູລວ່າ ມາຕຸຄາມມີກລິ່ນເໝັນ ພຣະພຸທສເຈົ້າຂ້ານ້ອຍ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄຮັບສັ່ງວ່າ ພິກຂຸນີທັ້ງຫຼາຍຈົ່ງໃຊ້ນ້ຳຊຳຣະ ແລ້ວທຣົງຍັງພຣະມຫາ ປຊາບໍດີໂຄຕມີເຖຣີໃຫ້ເຫັນແຈ້ງ ໃຫ້ສມາທານ ໃຫ້ອາຈຫານ ໃຫ້ຣ່າເຣີງ ດ້ວຍສັມມີກຖາ ເມື່ອພຣະມຫາ ປຊາບໍດີໂຄຕມີເຖຣີ ອັນພຣະຜູ້ມີພຣະພາຄໂປຼດປະທານໃຫ້ເຫັນແຈ້ງ ໃຫ້ສມາທານ ໃຫ້ອາຈຫານ ໃຫ້ຣ່າເຣີງ ດ້ວຍສັມມີກຖາແລ້ວ ຖວາຍບັງຄົມທຳປະທັກສິນຫລີກໄປແລ້ວ ພຣະອົງຄ໌ຈຶ່ງທຣົງກະທຳສັມມີກຖາໃນເພາະ ເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸທຳອິດເກີດນັ້ນ ແລ້ວຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕນ້ຳຊຳຣະ ແກ່ພິກຂຸນີທັ້ງຫຼາຍ.

ເຣື່ອງພຣະມຫາປຊາບໍດີໂຄຕມີເຖຣີ ຈົບ.

ເຣື່ອງພິກຂຸນີອົງຄ໌ນຶ່ງ

[໑໘໔] ກໍໂດຍສມັຍນັ້ນແລ ພິກຂຸນີອົງຄ໌ນຶ່ງຮູ້ວ່າ ພຣະຜູ້ມີພຣະພາຄທຣົງອນຸຍາຕນ້ຳຊຳຣະ ແລ້ວ ຈຶ່ງໃຊ້ນ້ຳຊຳຣະລຶກເກີນໄປ ໄດ້ເຮັດໃຫ້ເກີດແຜລຂຶ້ນໃນອົງຄ໌ຣທັສ ດັງນັ້ນນາງຈຶ່ງໄດ້ແຈ້ງເຣື່ອງນັ້ນແກ່ ພິກຂຸນີທັ້ງຫຼາຍ. ບັຣດາພິກຂຸນີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທຫ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸນີ ຈຶ່ງໄດ້ໃຊ້ນ້ຳຊຳຣະລຶກເກີນໄປລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າ ພິກຂຸນີໃຊ້ນ້ຳຊຳຣະ ລຶກເກີນໄປ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນລັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸນີຈຶ່ງໄດ້ໃຊ້ນ້ຳຊຳຣະ ລຶກເກີນໄປລະ ການກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍ ຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນລັຕິ

ໜ໐. ໕. ອີກຢ່າງ ພິກຂຸຓີຜູ້ຈະໃຊ້ນ້ຳຊຳຣະ ຄວຣໃຊ້ຊຳຣະລຶກພຽງສອງຂໍ້ອົງຄຸລີເປັນຢ່າງຍິ່ງ ເກີນກວ່ານັ້ນ ເປັນອາບັຕິປາຈິຕຕີຍ໌.

ເຣື່ອງພິກຂຸຓີອົງຄ໌ນຶ່ງ ຈົບ.

ສິກຂາບົທວິພັງຄ໌

[໑໘໕] ທີ່ຊື່ວ່າ ນ້ຳຊຳຣະ ໄດ້ແກ່ ນ້ຳທີ່ເຂົາເອີ້ນວ່ານ້ຳສຳຫຼັບຊຳຣະອົງຄ໌ຣຫັສ.

ບົທວ່າ ຜູ້ຈະໃຊ້ ຄື ຜູ້ຈະຊະລ້າງ.

ຄຳວ່າ ຄວຣໃຊ້ຊຳຣະລຶກພຽງສອງຂໍ້ອົງຄຸລີເປັນຢ່າງຍິ່ງ ຄື ຄວຣໃຊ້ຊຳຣະລຶກພຽງສອງຂໍ້ໃນສອງອົງຄຸລີ ເປັນຢ່າງຍິ່ງ.

ຄຳວ່າ ເກີນກວ່ານັ້ນ ຄວາມວ່າ ພິກຂຸຓີຍິນດີສັມຜັສໃຫ້ລ່ວງເລີຍເຂົ້າໄປ ໂດຍທີ່ສຸດແມ້ຊົ່ວປາຍເສັ້ນຜົມ ຕ້ອງອາບັຕິປາຈິຕຕີຍ໌.

ບົທພາຊນີຍ໌

ຕິກະປາຈິຕຕີຍ໌

[໑໘໖] ເກີນສອງຂໍ້ອົງຄຸລີ ພິກຂຸຓີສຳຄັນວ່າເກີນ ໃຊ້ຊຳຣະ ຕ້ອງອາບັຕິປາຈິຕຕີຍ໌.

ເກີນສອງຂໍ້ອົງຄຸລີ ພິກຂຸຓີສົງສັຍ ໃຊ້ຊຳຣະ ຕ້ອງອາບັຕິປາຈິຕຕີຍ໌.

ເກີນສອງຂໍ້ອົງຄຸລີ ພິກຂຸຓີສຳຄັນວ່າບໍ່ເຖິງ ໃຊ້ຊຳຣະ ຕ້ອງອາບັຕິປາຈິຕຕີຍ໌.

ທຸກະທຸກກົຏ

ບໍ່ເຖິງສອງຂໍ້ອົງຄຸລີ ພິກຂຸຓີສຳຄັນວ່າເກີນ ຕ້ອງອາບັຕິທຸກກົຏ.

ບໍ່ເຖິງສອງຂໍ້ອົງຄຸລີ ພິກຂຸຓີສົງສັຍ ຕ້ອງອາບັຕິທຸກກົຏ.

ບໍ່ຕ້ອງອາບັຕິ

ບໍ່ເຖິງສອງຂໍ້ອົງຄຸລີ ພິກຂຸຓີສຳຄັນວ່າບໍ່ເຖິງ ບໍ່ຕ້ອງອາບັຕິ.

ອນາປັຕຕິວາຣ

[໑໘໗] ໃຊ້ຊຳຣະລຶກພຽງສອງຂໍ້ອົງຄຸລີ ໑ ໃຊ້ຊຳຣະລຶກບໍ່ເຖິງສອງຂໍ້ອົງຄຸລີ ໑ ເພາະເຫຕຸອາພາຣ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຓວັຄຄ໌ ສິກຂາບົທທີ່ ໕ ຈົບ.

ລສຸນວັຄຄ໌ ສິກຂາບົທທີ່ ໖
ເຣື່ອງພິກຂຸນີພັຣຍາເກົ່າຂອງມຫາອຳມາຕຍ໌

[໑໖໗] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓ ພຣະເຊຕວັນ ອາຣາມຂອງອນາຖ ບິຓທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ມຫາອຳມາຕຍ໌ຜູ້ນຶ່ງ ຊື່ອາໂຣຫັນຕະ ໄດ້ບວຊຢູ່ໃນ ສຳນັກພິກຂຸ. ພັຣຍາເກົ່າຂອງທ່ານກໍໄດ້ບວຊຢູ່ໃນສຳນັກພິກຂຸນີ. ຕໍ່ມາ ພິກຂຸນັ້ນທຳພັຕກິຈໃນສຳນັກພິກຂຸນີ ນັ້ນ. ເມື່ອພິກຂຸນັ້ນກຳລັງຈັນຢູ່ ພິກຂຸນີນັ້ນໄດ້ເຂົ້າໄປຢືນປຕິບັຕິຢູ່ໃກ້ໆ ດ້ວຍນ້ຳຈັນແລະການພັດວີ ແລ້ວກ່າວຖ້ອຍຄຳກ່ຽວກັບການຄອງເຮືອນຍ່ອຍອນຢູ່ ຈຶ່ງພິກຂຸນັ້ນຮຸກຮານນາງວ່າ ດູຣານ້ອງສາວ ທ່ານ ຢ່າໄດ້ເຮັດເຊັ່ນນີ້ ຂໍ້ນີ້ບໍ່ຄວຣ.

ນາງໄດ້ກ່າວວ່າ ເມື່ອກ່ອນທ່ານໄດ້ກະທຳຢ່າງນີ້ໆ ແກ່ຂ້າພເຈົ້າ ບັດນີ້ ພຽງເທົ່ານີ້ກໍທົນບໍ່ໄດ້ ເມື່ອແລ້ວໄດ້ຄອບຂັນນ້ຳລົງເທິງຫົວ ປະຫາຣດ້ວຍພັດ. ບັຣດາພິກຂຸນີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງ ໂທຬ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸນີຈຶ່ງໄດ້ໃຫ້ປະຫາຣແກ່ພິກຂຸລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພິກຂຸນີໃຫ້ປະຫາຣ ແກ່ພິກຂຸ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັຜຍັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸນີຈຶ່ງໄດ້ໃຫ້ປະຫາຣ ແກ່ພິກຂຸລະ ການກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັຜຍັຕິ

໖໑. ໖. ອີກຢ່າງ ພິກຂຸນີໃດ ເມື່ອພິກຂຸກຳລັງຈັນຢູ່ ເຂົ້າໄປປຕິບັຕິຢູ່ໃກ້ໆ ດ້ວຍນ້ຳຈັນ ຫຼືດ້ວຍການພັດວີ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸນີພັຣຍາເກົ່າຂອງມຫາອຳມາຕຍ໌ ຈົບ.

ສິກຂາບົທວິພັງຄ໌

[໑໖໘] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ພິກຂຸນີ ຄວາມວ່າ ທີ່ຊື່ວ່າ ພິກຂຸນີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ພິກຂຸນີ ທີ່ທຮົງປະສົງຄ໌ໃນອັຖນີ້.

ບົທວ່າ ເມື່ອພິກຂຸ ໄດ້ແກ່ ເມື່ອອຸປສັມບັນ.

ບົທວ່າ ກຳລັງຈັນຢູ່ ຄື ກຳລັງຈັນໂພຊນະ ໕ ຢ່າງໃດຢ່າງນຶ່ງຢູ່.

ທີ່ຊື່ວ່າ ນ້ຳຈັນ ໄດ້ແກ່ ນ້ຳຊນິດໃດຊນິດນຶ່ງສຳຫຼັບດື່ມ.

ທີ່ຊື່ວ່າ ການພັດວີ ໄດ້ແກ່ ເຄື່ອງໂບກແກວ່ງຊນິດໃດຊນິດນຶ່ງສຳຫຼັບພັດວີ.

ບົທວ່າ ເຂົ້າໄປປຕິບັຕິຢູ່ໃກ້ໆ ຄວາມວ່າ ຢູ່ໃນຫັຕຖບາສ ຕ້ອງອາບັຕິປາຈິຕຕີຍ໌.

ບົທພາຊນີຍ໌

ຕິກະປາຈິຕຕີຍ໌

[໑໗໐] ອຸປສັມບັນ ພິກຂຸນີສຳຄັຍວ່າອຸປສັມບັນ ເຂົ້າໄປປຕິບັຕິຢູ່ໃກ້ໆ ດ້ວຍນ້ຳຈັນ ຫຼື ດ້ວຍການພັດວີ ຕ້ອງອາບັຕິປາຈິຕຕີຍ໌.

ອຸປສັມບັນ ພິກຂຸນີສົງສັຍ ເຂົ້າໄປປຕິບັຕິຢູ່ໃກ້ໆ ດ້ວຍນ້ຳຈັນຫຼືການພັດວີ ຕ້ອງອາບັຕິ ປາຈິຕຕີຍ໌.

ອຸປສັມບັນ ພິກຂຸນີສຳຄັຍວ່າອນຸປສັມບັນ ເຂົ້າໄປປຕິບັຕິຢູ່ໃກ້ໆ ດ້ວຍນ້ຳຈັນຫຼືການພັດວີ ຕ້ອງອາບັຕິປາຈິຕຕີຍ໌

ຈັກກະທຸກກົຎ

ປຕິບັຕິຢູ່ນອກຫັຕຖບາສ ຕ້ອງອາບັຕິທຸກກົຎ.

ພິກຂຸຈັນຂອງຄ້ຽວ ພິກຂຸນີເຂົ້າໄປປຕິບັຕິ ຕ້ອງອາບັຕິທຸກກົຎ.

ເຂົ້າໄປປຕິບັຕິອນຸປສັມບັນ ຕ້ອງອາບັຕິທຸກກົຎ.

ອນຸປສັມບັນ ພິກຂຸນີສຳຄັຍວ່າອຸປສັມບັນ ຕ້ອງອາບັຕິທຸກກົຎ.

ອນຸສັມບັນ ພິກຂຸນີສົງສັຍ ຕ້ອງອາບັຕິທຸກກົຎ

ອນຸປສັມບັນ ພິກຂຸນີສຳຄັຍວ່າອນຸປສັມບັນ ຕ້ອງອາບັຕິທຸກກົຎ.

ອນາປັຕຕິວາຣ

[໑໗໑] ພິກຂຸນີຖວາຍເອງ ໑ ໃຫ້ຄົນອື່ນຖວາຍ ໑ ສັ່ງອນຸປສັມບັນໃຫ້ປຕິບັຕິ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຓວັຄຄ໌ ສິກຂາບົທທີ່ ໖ ຈົບ.

ລສຸນວັຄຄ໌ ສິກຂາບົດທີ່ ໆ

ເຣື່ອງພິກຂຸນີຫຼາຍອົງຄ໌

[໑ໆ໔] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓ ພຣະເຊຕວັນ ອາຣາມຂອງອນາຖບິນທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ເປັນຣະດູກ່ງວເຂົ້າ ພິກຂຸນີທັ້ງຫຼາຍຂໍເຂົ້າເປືອກສົດແລ້ວນຳເຂົ້າໄປໃນພຣະນຄຣ ເມື່ອເຖິງທີ່ປະຕູພຣະນຄຣ ຄົນທັ້ງຫຼາຍພາກັນກັ້ນປະຕູເວົ້າສັພຍອກວ່າຂ້າແຕ່ຍາແມ່ທັ້ງຫຼາຍ ຂໍທ່ານຈົງໃຫ້ສ່ວນແບ່ງແດ່ ດັ່ງນີ້ ແລ້ວປ່ອຍໄປ ເມື່ອພິກຂຸນີເຫລົ່ານັ້ນກັບໄປເຖິງສຳນັກແລ້ວໄດ້ແຈ້ງເຣື່ອງນັ້ນແກ່ພິກຂຸນີທັ້ງຫຼາຍ ບັຣດາພິກຂຸນີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນໂພນທະນາວ່າ ເປັນຫຍັງພິກຂຸນີທັ້ງຫຼາຍຈຶ່ງໄດ້ຂໍເຂົ້າເປືອກສົດເຂົາລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພວກພິກຂຸນີຂໍເຂົ້າເປືອກສົດເຂົາ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັລລັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸນີທັ້ງຫຼາຍຈຶ່ງໄດ້ຂໍເຂົ້າເປືອກສົດເຂົາລະ ການກະທຳຂອງພວກນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍຈົງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັລລັຕິ

໖໔. ໆ. ອີກຢ່າງ ພິກຂຸນີໃດ ຂໍກໍດີ ໃຫ້ຂໍກໍດີ ຄົ່ວກໍດີ ໃຫ້ຄົ່ວກໍດີ ຕຳກໍດີ ໃຫ້ຕຳກໍດີຫຸງກໍດີ ໃຫ້ຫຸງກໍດີ ຊຶ່ງເຂົ້າເປືອກສົດ ແລ້ວລັນ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸນີຫຼາຍອົງຄ໌ ຈົບ.

ສິກຂາບົທວິພັງຄ໌

[໑ໆ໖] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ພິກຂຸນີ ຄວາມວ່າ ທີ່ຊື່ວ່າ ພິກຂຸນີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ພິກຂຸນີທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ເຂົ້າເປືອກສົດ ໄດ້ແກ່ ເຂົ້າສາລີ ເຂົ້າເປືອກ ເຂົ້າໜຽວ ເຂົ້າລະມານ ເຂົ້າຟ່າງ ລູກເດືອຍ ຫຍ້າກັບແກ້.

ບໍທວ່າ ຂໍ ຄື ຂໍເອງ. ບໍທວ່າ ໃຫ້ຂໍ ຄື ໃຫ້ຜູ້ອື່ນຂໍແທນ.

ບໍທວ່າ ຄົ່ວ ຄື ຄົ່ວເອງ. ບໍທວ່າ ໃຫ້ຄົ່ວ ຄື ໃຫ້ຜູ້ອື່ນຄົ່ວ.

ບໍທວ່າ ຕຳ ຄື ຕຳເອງ. ບໍທວ່າ ໃຫ້ຕຳ ຄື ໃຫ້ຜູ້ອື່ນຕຳ.

ບໍທວ່າ ຫຸງ ຄື ຫຸງເອງ. ບໍທວ່າ ໃຫ້ຫຸງ ຄື ໃຫ້ຜູ້ອື່ນຫຸງ.

ພິກຂຸນີຮັບປະເຄນໄວ້ດ້ວຍໝາຍໃຈວ່າ ຈະຈັນ ຕ້ອງອາບັຕິທຸກກົຜ. ຈັນ ຕ້ອງອາບັຕິປາຈິຕຕີຍ໌ ທຸກໆ ຄຳກຼືນ.

ອນາປັຕຕິວາຣ

[໑໗໔] ເພາະເຫຕຸອາພາຂ ໑ ຂໍອປຣັຕຕຊາຕິ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງ ອາບັຕິແລ.

ລສຸຕວັຄຄ໌ ສິກຂາບົທທີ່ ໗ ຈົບ.

ລສຸຓວັຄຄ໌ ສິກຂາບົທທີ່ ๗
ເຣື່ອງພຣາຫ໌ມນ໌ຄົນນຶ່ງ

[໑໗໔] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນ ອາຣາມຂອງ ອນາຖບິຓທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ພຣາຫ໌ມນ໌ຄົນນຶ່ງເປັນຂ້າຣາຊກາຣ ຖືກປົດອອກ ຈາກຣາຊກາຣແລ້ວຄຶດວ່າຈະທູລຂໍພຣະຣາຊທານຕຳແໜ່ງເດີມຄືນ ຈຶ່ງສນານເກົ້າແລ້ວເດີນຜ່ານທີ່ພຳນັກ ຂອງພິກຂຸຕີໄປສູ່ຣາຊຕະກູລ ພິກຂຸຕີອົງຄ໌ນຶ່ງຖ່າຍວັຈຈະລົງໃນໝໍ້ ແລ້ວເທຖິ້ມອອກນອກຝາ ຣາດລົງເທິງ ຫົວຂອງພຣາຫ໌ມນ໌ນັ້ນ ດັ່ງນັ້ນ ພຣາຫ໌ມນ໌ຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ພິກຂຸຕີໂລ້ນເຫລົ່ານີ້ບໍ່ແມ່ນ ສມຓະ ບໍ່ມີສົມບັຕິ ເປັນຫຍັງຈຶ່ງໄດ້ເທໝໍ້ຄູຖລົງເທິງຫົວເຮົາລະ ເຮົາຈັກເຜົາທີ່ພຳນັກຂອງພິກຂຸຕີເຫລົ່ານີ້ເສັຍ ດັ່ງນັ້ນ ຈຶ່ງຖືກະບອງໄຟເຂົ້າໄປສູ່ທີ່ພຳນັກພິກຂຸຕີ ອຸບາສິກາຄົນນຶ່ງອອກມາຈາກສຳນັກພິກຂຸຕີ ເຫັນພຣາຫ໌ມຓ໌ ນັ້ນກຳລັງຖືກະບອງໄຟຜ່ານເຂົ້າໄປສູ່ທີ່ພຳນັກ ຈຶ່ງຖາມພຣາຫ໌ມນ໌ວ່າ ທ່ານຜູ້ຈະເຣີຍ ເຫຕຸໃດທ່ານຖືກະບອງໄຟ ເຂົ້າໄປສູ່ທີ່ພຳນັກພິກຂຸຕີ?

ພຣາຫ໌ມນ໌ຕອບວ່າ ທ່ານຜູ້ຈະເຣີຍ ເພາະພິກຂຸຕີໂລ້ນເຫລົ່ານີ້ເປັນສຕຣີບໍ່ມີສົມບັຕິ ເທໝໍ້ຄູຖລົງ ເທິງຫົວຂອງເຮົາ ເຮົາຈຶ່ງຈັກເຜົາສຳນັກຂອງພິກຂຸຕີເຫລົ່ານີ້ເສັຍ.

ອຸບາສິກາຊີ້ແຈງວ່າ ໄປເຖາະ ທ່ານຜູ້ຈະເຣີຍ ນັ້ນເປັນມຸງຄົລ ທ່ານຈັກໄດ້ຊັພຍ໌ ໑,໐໐໐ ຕຳລຶງ ແລະ ຕຳແໜ່ງເດີມຄືນ.

ຝ່າຍພຣາຫ໌ມນ໌ນັ້ນສນານເກົ້າແລ້ວໄປສູ່ຣາຊຕະກູລ ໄດ້ຊັພຍ໌ພຣະຣາຊທານ ໑,໐໐໐ ຕຳລຶງ ແລະ ຕຳແໜ່ງເດີມນັ້ນຄືນ. ຈຶ່ງອຸບາສິການັ້ນເຂົ້າໄປສູ່ທີ່ພຳນັກພິກຂຸຕີ ແຈ້ງເຣື່ອງນັ້ນແກ່ພິກຂຸຕີທັ້ງຫຼາຍແລ້ວຂູ່ ສຳທັບ.

ບັຣດາພິກຂຸຕີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸຕີທັ້ງຫຼາຍ ຈຶ່ງໄດ້ເທອຸຈຈາຣະຖິ້ມອອກພາຍນອກຝາທີ່ພຳນັກລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພວກພິກຂຸຕີ ເທອຸຈຈາຣະຖິ້ມອອກພາຍນອກຝາທີ່ພຳນັກ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນຍັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພວກພິກຂຸຕີຈຶ່ງໄດ້ເທ ອຸຈຈາຣະ

ຖິ້ມອອກນອກຝາທີ່ພຳນັກລະ ການກະທຳຂອງພວກນາງນັ່ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈົງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັລລັຕິ

໖໖. ໗. ອີກຢ່າງ ກິກຂຸຕີໃດ ເທຫຼືໃຫ້ເທ ຊຶ່ງອຸຈຈາຣະກໍດີ ປັສສາວະກໍດີ ຂີ້ເຍື່ອກໍດີ ຂອງເປັນເດນກໍດີ ຓ ກາຍນອກຝາທີ່ພຳນັກກໍດີ ຓ ກາຍນອກກຳແພງກໍດີ ເປັນປາຈິຕຕີຍ໌.

ເຣື່ອງພຣາຫ໌ມນ໌ຄົນນຶ່ງ ຈົບ.

ສິກຂາບົທວິກັງຄ໌

[໑໗໖] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ກິກຂຸຕີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ອຸຈຈາຣະ ໄດ້ແກ່ ສິ່ງທີ່ເຂົາເອີ້ນກັນວ່າຄູຖ.

ທີ່ຊື່ວ່າ ປັສສາວະ ໄດ້ແກ່ ສິ່ງທີ່ເຂົາເອີ້ນກັນວ່າມູຕຣ໌.

ທີ່ຊື່ວ່າ ຂີ້ເຍື່ອ ໄດ້ແກ່ ສິ່ງທີ່ເຂົາເອີ້ນກັນວ່າຂີ້ຍຸກຂີ້ເຍື້ອ.

ທີ່ຊື່ວ່າ ຂອງເປັນເດນ ໄດ້ແກ່ ອາມິສເປັນເດນ ຫຼືກະດູກ ຫຼືນ້ຳທີ່ເປັນເດນ.

ທີ່ຊື່ວ່າ ຝາ ໄດ້ແກ່ຝາ ៦ ຊນິດ ຄື ຝາອິຖ ຝາສິລາ ຝາໄມ້.

ທີ່ຊື່ວ່າ ກຳແພງ ໄດ້ແກ່ກຳແພງ ៦ ຊນິດ ຄື ກຳແພງອິຖ ກຳແພງສິລາ ກຳແພງໄມ້.

ບົທວ່າ ກາຍນອກຝາ ຄື ຂ້າງນອກຝາທີ່ຢູ່.

ບົທວ່າ ກາຍນອກກຳແພງ ຄື ຂ້າງນອກກຳແພງ.

ບົທວ່າ ເທ ຄວາມວ່າ ເທເອງ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ໃຫ້ເທ ຄວາມວ່າ ໃຊ້ຄົນອື່ນ ຕ້ອງອາບັຕິທຸກກົຎ ໃຊ້ເຂົາຄັ້ງດຽວ ເຂົາເທແມ້ຫຼາຍຄັ້ງ ຕ້ອງອາບັຕິປາຈິຕຕີຍ໌.

ອນາປັຕຕິວາຣ

[໑໗໗] ເບິ່ງກ່ອນແລ້ວຈຶ່ງເທ ໑ ເທໃນທີ່ທີ່ເຂົາບໍ່ໃຊ້ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຕວັຄຄ໌ ສິກຂາບົທທີ່ ໗ ຈົບ.

ລສຸດາວັຄຄ໌ ສິກຂາບົທທີ່ ໗

ເຣື່ອງກິກຂຸຕີຫຼາຍອົງຄ໌

[໑໗໘] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓ ພຣະເຊຕວັນ ອາຣາມຂອງອນາຖ ບິດທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ສັ່ງນັ້ນ ພຣາຫ໌ມນ໌ຄົນນຶ່ງມີນາເຂົ້າໜຽວຢູ່ໃກ້ທີ່ພຳນັກຂອງ ກິກຂຸຕີ ກິກຂຸຕີທັ້ງຫຼາຍເທອຸຈຈາຣະແດ່ ປັສສາວະແດ່ ຂີ້ເຍື່ອແດ່ ຂອງເປັນເດນແດ່ ຖີ້ມລົງໃນນາ ຈຶ່ງພຣາຫ໌ມນ໌ນັ້ນເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີທັ້ງຫຼາຍຈຶ່ງໄດ້ເຮັດນາເຂົ້າໜຽວຂອງ ຂ້າພເຈົ້າໃຫ້ເສັຍຫາຍລະ

ກິກຂຸຕີທັ້ງຫຼາຍໄດ້ຍິນພຣາຫ໌ມນ໌ນັ້ນເພ່ງໂທษ ຕິຕຽນ ໂພນທະນາຢູ່ ບັຣດາທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີທັ້ງຫຼາຍຈຶ່ງໄດ້ເທອຸຈຈາຣະແດ່ ປັສສາວະແດ່ ຂີ້ເຍື່ອແດ່ ຂອງເປັນເດນແດ່ ລົງໃນຂອງຂຽວສົດລະ.

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸຕີທັ້ງຫຼາຍ ຂ່າວວ່າພວກກິກຂຸຕີ ເທອຸຈຈາຣະແດ່ ປັສສາວະແດ່ ຂີ້ເຍື່ອແດ່ ຂອງເປັນເດນແດ່ ລົງໃນຂອງຂຽວສົດ ແທ້ບໍ່?

ກິກຂຸຕີທັ້ງຫຼາຍທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັລລັຕິສິກຂາບົທ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ເປັນຫຍັງກິກຂຸຕີທັ້ງຫຼາຍຈຶ່ງໄດ້ເທ ອຸຈຈາຣະແດ່ ປັສສາວະແດ່ ຂີ້ເຍື່ອແດ່ ຂອງເປັນເດນແດ່ ລົງໃນຂອງຂຽວສົດລະ ກາຣກະທຳ ຂອງພວກນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈົງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັລລັຕິ

໗໔. ໗. ອີກຢ່າງ ກິກຂຸຕີໃດ ເທ ຫຼືໃຫ້ເທ ຊຶ່ງອຸຈຈາຣະກໍດີ ປັສສາວະກໍດີ ຂີ້ເຍື່ອ ກໍດີ ຂອງເປັນເດນກໍດີ ລົງໃນຂອງຂຽວສົດ ເປັນປາຈິຕຕີຍ໌.

ເຣື່ອງກິກຂຸຕີຫຼາຍອົງຄ໌ ຈົບ.

ສິກຂາບົທວິກັງຄ໌

[໑໗໙] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ກິກຂຸຕີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ອຸຈຈາຣະ ໄດ້ແກ່ ສິ່ງທີ່ເຂົາເອີ້ນກັນວ່າຄູຖ.

ທີ່ຊື່ວ່າ ປັສສາວະ ໄດ້ແກ່ ສິ່ງທີ່ເຂົາເອີ້ນກັນວ່າມູຕຣ໌.

ທີ່ຊື່ວ່າ ຂີ້ເຍື່ອ ໄດ້ແກ່ ສິ່ງທີ່ເຂົາເອີ້ນກັນວ່າຂີ້ຍຸກຂີ້ເຍື້ອ.

ທີ່ຊື່ວ່າ ຂອງເປັນເດນ ໄດ້ແກ່ອາມິສເປັນເດນ ຫຼືກະດູກ ຫຼືນ້ຳທີ່ເປັນເດນ.

ທີ່ຊື່ວ່າ ຂອງຂຽວສົດ ໄດ້ແກ່ ບຸພພັຓຓຊາຕິ ອປຣັຓຓຊາຕິ ທີ່ປະຊາຊົນປູກໄວ້ສຳຫຼັບ ເປັນເຄື່ອງອຸປໂກຄແລະບໍຣິໂກຄ.

ບົທວ່າ ເທ ຄວາມວ່າ ເທເອງ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ໃຫ້ເທ ຄວາມວ່າ ໃຊ້ຄົນອື່ນ ຕ້ອງອາບັຕິທຸກກົຏ ໃຊ້ເຂົາຄັ້ງດຽວເຂົາເທແມ້ຫຼາຍຄັ້ງ ກໍຕ້ອງອາບັຕິປາຈິຕຕີຍ໌.

ບົທກາຊນີຍ໌

ຕິກະປາຈິຕຕີຍ໌

[໑໗໐] ຂອງຂຽວສົດ ກິກຂຸຕີສຳຄັນວ່າຂອງຂຽວສົດ ເທ ຫຼືໃຫ້ເທ ຕ້ອງອາບັຕິປາຈິຕຕີຍ໌.

ຂອງຂຽວສົດ ກິກຂຸຕີສົງສັຍ ເທ ຫຼືໃຫ້ເທ ຕ້ອງອາບັຕິປາຈິຕຕີຍ໌.

ຂອງຂຽວສົດ ກິກຂຸຕີສຳຄັນວ່າ ບໍ່ແມ່ນຂອງຂຽວສົດ ເທ ຫຼືໃຫ້ເທ ຕ້ອງອາບັຕິປາຈິຕຕີຍ໌.

ທຸກະທຸກກົຏ

ບໍ່ແມ່ນຂອງຂຽວສົດ ກິກຂຸຕີສຳຄັນວ່າ ຂອງຂຽວສົດ ຕ້ອງອາບັຕິທຸກກົຏ.

ບໍ່ແມ່ນຂອງຂຽວສົດ ກິກຂຸຕີສົງສັຍ ຕ້ອງອາບັຕິທຸກກົຏ.

ບໍ່ແມ່ນຂອງຂຽວສົດ ກິກຂຸຕີສຳຄັນວ່າ ບໍ່ແມ່ນຂອງຂຽວສົດ ບໍ່ຕ້ອງອາບັຕິ.

ອນາປັຕຕິວາຣ

[໑໗໑] ເບິ່ງກ່ອນແລ້ວຈຶ່ງເທ ໑ ເທເທິງຄັນນາ ໑ ບອກຂໍອນຸຍາຕຕໍ່ເຈົ້າຂອງແລ້ວເທ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຓວັຄຄ໌ ສິກຂາບົທທີ່ ໗ ຈົບ.

ລສຸຕວັຄຄ໌ ສິກຂາບົທທີ່ ໑໐

ເຣື່ອງພິກຂຸຕີຈັພພັຄຄີຍ໌

[໑໗໔] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທຣເຈົ້າປະທັບຢູ່ ຓ ພຣະເວລຸວັນວິຫາຣ ອັນເປັນສຖານທີ່ພຣະຣາຊທານເຫຍືອແກ່ກະແຕ ເຂຕພຣະນຄຣຣາຊຄຣຶຫ໌. ຄັ້ງນັ້ນ ໃນພຣະນຄຣຣາຊຄຣຶຫ໌ມີມຫໍຣສົພເທິງຍອດພູເຂົາ ເຫລົ່າພິກຂຸຕີຈັພພັຄຄີຍ໌ໄດ້ພາກັນໄປເບິ່ງມຫໍຣສົພເທິງຍອດພູເຂົາ ພວກຊາວບ້ານພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸຕີທັ້ງຫຼາຍຈຶ່ງໄດ້ພາກັນໄປເບິ່ງການຟ້ອນຣຳແດ່ ການຂັບຮ້ອງແດ່ ການປະໂຄມດົນຕຣີແດ່ ເຫມືອນສຕຣີຄຣືຫັສຖ໌ຜູ້ບໍຣິໂພຄກາມລະ ...

ພິກຂຸຕີທັ້ງຫຼາຍໄດ້ຍິນຊາວບ້ານພວກນັ້ນ ພາກັນເພ່ງໂທษ ຕິຕຽນ ໂພນທະນາຢູ່ ບັຣດາທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸຕີຈັພພັຄຄີຍ໌ຈຶ່ງໄດ້ພາກັນໄປເບິ່ງການຟ້ອນຣຳແດ່ ການຂັບຮ້ອງແດ່ ການປະໂຄມດົນຕຣີແດ່ລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າ ພິກຂຸຕີຈັພພັຄຄີຍ໌ພາກັນໄປເບິ່ງການຟ້ອນຣຳແດ່ ການຂັບຮ້ອງແດ່ ການປະໂຄມດົນຕຣີແດ່ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທຣເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນຍັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທຣເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸຕີຈັພພັຄຄີຍ໌ຈຶ່ງໄດ້ພາກັນໄປເບິ່ງການຟ້ອນຣຳແດ່ ການຂັບຮ້ອງແດ່ ການປະໂຄມດົນຕຣີແດ່ລະ ການກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸຕີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນຍັຕິ

໗໕. ໑໐. ອີກຢ່າງ ພິກຂຸຕີໃດ ໄປເບິ່ງການຟ້ອນຣຳກໍດີ ການຂັບຮ້ອງກໍດີ ການປະໂຄມດົນຕຣີກໍດີ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸຕີຈັພພັຄຄີຍ໌ ຈົບ.

ສິກຂາບົທວິພັງຄ໌

[໑໗໕] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ກິກຂຸຕີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ກາຣຟ້ອນຣຳ ໄດ້ແກ່ ກາຣຟ້ອນຢ່າງໃດຢ່າງນຶ່ງ.

ທີ່ຊື່ວ່າ ກາຣຂັບຮ້ອງ ໄດ້ແກ່ ເພງຂັບຢ່າງໃດຢ່າງນຶ່ງ.

ທີ່ຊື່ວ່າ ກາຣປະໂຄມດົນຕຣີ ໄດ້ແກ່ ເຄື່ອງດີດສີຕີເປ່າຢ່າງໃດຢ່າງນຶ່ງ.

ກິກຂຸຕີຍ່າງໄປເພື່ອຈະເບິ່ງ ຕ້ອງອາບັຕິທຸກກົຜ. ຢືນຢູ່ ໓ ທີ່ໃດ ຍັງຫຼຽວເຫັນຫຼືໄດ້ຍິນ ຕ້ອງອາບັຕິປາຈິຕຕິຍ໌. ພົ້ນສາຍຕາໄປແລ້ວ ກັບເບິ່ງແຍງຫຼືຟັງອີກ ກໍຕ້ອງອາບັຕິປາຈິຕຕິຍ໌.

ກິກຂຸຕີຍ່າງໄປເພື່ອຈະເບິ່ງເຄື່ອງມຫໍຣສົພຂະເພາະຢ່າງໆ ຕ້ອງອາບັຕິທຸກກົຜ. ຢືນຢູ່ ໓ ທີ່ໃດ ຍັງຫຼຽວເຫັນຫຼືໄດ້ຍິນ ກໍຕ້ອງອາບັຕິປາຈິຕຕິຍ໌. ພົ້ນສາຍຕາໄປແລ້ວ ກັບເບິ່ງແຍງຫຼືຟັງອີກ ກໍຕ້ອງອາບັຕິປາຈິຕຕິຍ໌.

ອນາປັຕຕິວາຣ

[໑໗໔] ຢືນຢູ່ໃນອາຣາມຫຼຽວເຫັນຫຼືໄດ້ຍິນ ໑ ເຂົາຟ້ອນຣຳຂັບຮ້ອງ ຫຼືປະໂຄມຜ່ານມາຍັງສຖານທີ່ກິກຂຸຕີຢືນຢູ່ ນັ່ງຢູ່ ຫຼືນອນຢູ່ ໑ ເດີນສວນທາງໄປ ຫຼຽວເຫັນຫຼືໄດ້ຍິນ ໑ ເມື່ອມີກິຈຈຳເປັນເດີນຜ່ານໄປຫຼຽວເຫັນຫຼືໄດ້ຍິນ ໑ ມີອັນຕຣາຍ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ລສຸຓວັຄຄ໌ ສິກຂາບົທທີ່ ໑໐ ຈົບ

ປາຈິຕຕິຍ໌ ວັຄຄ໌ທີ່ ໑ ຈົບ.

ປາຈິຕຕີຍ໌ ວັຄຄ໌ທີ່ ໘

ອັນຮກາຣວັຄຄ໌ ສິກຂາບົທທີ່ ໑

ເຣື່ອງກິກຂຸຕີອັນເຕວາສິນີຂອງພຣະກັທທາກາປິລານີເຖຣີ

[໑໗໘] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ณ ພຣະເຊຕວັນ ອາຣາມຂອງອນາຖບິຓທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ຍາຕິຜູ້ຊາຍຂອງກິກຂຸຕີ ອັນເຕວາສິນີແຫ່ງພຣະກັທທາກາປິລານີເຖຣີ ໄດ້ຈາກບ້ານໄປສູ່ພຣະນຄຣສາວັຕຖີດ້ວຍກຣຕີຍກິຈບາງຢ່າງ. ຝ່າຍກິກຂຸຕີນັ້ນກັບຍາຕິຜູ້ຊາຍນັ້ນນຶ່ງຕໍ່ນຶ່ງ ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ໃນເວລາຄ່ຳມືດ ບໍ່ມີແສງສວ່າງ.

ບັຣດາກິກຂຸຕີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີຈຶ່ງໄດ້ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກັບບຸຣຸษໃນເວລາຄ່ຳມືດ ທີ່ບໍ່ມີແສງສວ່າງ ນຶ່ງຕໍ່ນຶ່ງລະ ...

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າ ກິກຂຸຕີກັບບຸຣຸษນຶ່ງຕໍ່ນຶ່ງ ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ໃນເວລາຄ່ຳມືດ ທີ່ບໍ່ມີແສງສວ່າງ ແທ້ບໍ່?

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນຍັຕິສິກຂາບົທ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ເປັນຫຍັງກິກຂຸຕີກັບບຸຣຸษນຶ່ງຕໍ່ນຶ່ງຈຶ່ງໄດ້ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ໃນເວລາຄ່ຳມືດ ທີ່ບໍ່ມີແສງສວ່າງລະ ກາຣກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈຶ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນຍັຕິ

໖໖. ໑. ອີກຢ່າງ ກິກຂຸຕີໃດ ກັບບຸຣຸษນຶ່ງຕໍ່ນຶ່ງ ຢືນຮ່ວມກໍດີ ເຈຣຈາຮ່ວມກໍດີ ໃນເວລາຄ່ຳມືດ ບໍ່ມີປະທີປ ເປັນປາຈິຕຕີຍ໌.

ເຣື່ອງກິກຂຸຕີອັນເຕວາສິນີຂອງພຣະກັທທາກາປິລານີເຖຣີ ຈົບ.

ສິກຂາບົທວິກັງຄ໌

[໑໗໙] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ກິກຂຸຕີທີ່ທຣົງປະສົງຄ໌ໃນອັຖນີ້.

ບົທວ່າ ໃນເວລາຄ່ຳມືດ ໄດ້ແກ່ ເວລາພຣະອາທິຕຍ໌ຕົກດິນແລ້ວ.

ບົທວ່າ ບໍ່ມີປະທີປ ຄື ບໍ່ມີແສງສວ່າງ.

ທີ່ຊື່ວ່າ ບຸຣຸษ ໄດ້ແກ່ ມນຸษຍ໌ຜູ້ຊາຍ ບໍ່ແມ່ນຍັກษ໌ຜູ້ຊາຍ ບໍ່ແມ່ນເປຕຜູ້ຊາຍ ບໍ່ແມ່ນສັຕວ໌ດິຣັຈฉານໂຕຜູ້ ເປັນບຸຄຄົລຜູ້ຮູ້ຄວາມ ເປັນຜູ້ສາມາຖຈະຢືນຮ່ວມ ເຈຣຈາຮ່ວມໄດ້.

ບົທວ່າ ກັບ ຄື ດ້ວຍກັນ.

ບົທວ່າ ນຶ່ງຕໍ່ນຶ່ງ ຄື ບຸຣຸษນຶ່ງ ແລະພິກຂຸຕີອົງຄ໌ນຶ່ງ.

ບົທວ່າ ຢືນຮ່ວມກໍດີ ຄື ຢືນຢູ່ໃນຣະຍະຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ເຈຣຈາຮ່ວມກໍດີ ຄື ເຈຣຈາຢູ່ໃນຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌

ຢືນຮ່ວມ ຫຼືເຈຣຈາຮ່ວມ ພົ້ນຣະຍະຊ່ວງແຂນ ຕ້ອງອາບັຕິທຸກກົฏ.

ຢືນຮ່ວມຫຼືເຈຣຈາຮ່ວມ ກັບຍັກษ໌ຜູ້ຊາຍ ເປຕຜູ້ຊາຍ ບັณເຫາະກ໌ຫຼືສັຕວ໌ດິຣັຈฉານໂຕຜູ້ມີຮ່າງກາຍເໝືອນມນຸษຍ໌ ຕ້ອງອາບັຕິທຸກກົฏ.

ອນາປັຕຕິວາຣ

[໑໗໗] ມີສຕຣີຜູ້ຮູ້ຄວາມຄົນໃດຄົນນຶ່ງຢູ່ເປັນເພື່ອນ ໑ ບໍ່ເພ່ງທີ່ລັບຢືນຮ່ວມຫຼືເຈຣຈາຮ່ວມ ໑ ສົ່ງໃຈໄປອື່ນ ຢືນຮ່ວມຫຼືເຈຣຈາຮ່ວມ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ອັນธກາຣວັຄຄ໌ ສິກຂາບົທທີ່ ໑ ຈົບ.

ອັນຂກາຣວັຄຄ໌ ສິກຂາບົທທີ່ ໔

ເຣື່ອງພິກຂຸນີອັນເຕວາສິນີຂອງພຣະພັທທາກາປິລານີເຖຣີ

[໑໗໗] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນ ອາຣາມອນາຖ ບິຕຫິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ຍາຕິຜູ້ຊາຍຂອງພິກຂຸນີອັນເຕວາສິນີແຫ່ງພັທທາກາປິລານີເຖຣີ ໄດ້ຈາກບ້ານໄປສູ່ພຣະນຄຣສາວັຕຖີດ້ວຍກຣຕິຍກິຈບາງຢ່າງ. ຝ່າຍພິກຂຸນີນັ້ນຮູ້ແລ້ວວ່າ ພຣະຜູ້ມີພຣະພາຄ ທຣົງຫ້າມການຢືນຮ່ວມ ເຈຣຈາຮ່ວມ ກັບບຸຣຸຫນຶ່ງຕໍ່ນຶ່ງ ໃນເວລາຄ່ຳມືດ ບໍ່ມີປະທີປ ຈຶ່ງຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກັບບຸຣຸຫຜູ້ນັ້ນແລະນຶ່ງຕໍ່ນຶ່ງ ໃນສຖານທີ່ກຳບັງ.

ບັຣດາພິກຂຸນີທີ່ເປັນຜູ້ມັກນ້ອຍ .. ຕ່າງພາກັນເພ່ງໂທຫ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸນີຈຶ່ງ ໄດ້ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກັບບຸຣຸຫນຶ່ງຕໍ່ນຶ່ງ ໃນສຖານທີ່ກຳບັງລະ.

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພິກຂຸນີຢືນຮ່ວມ ແດ່ເຈຣຈາຮ່ວມແດ່ ກັບບຸຣຸຫນຶ່ງຕໍ່ນຶ່ງ ໃນສຖານທີ່ກຳບັງ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນລັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸນີຈຶ່ງໄດ້ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກັບບຸຣຸຫນຶ່ງຕໍ່ນຶ່ງ ໃນສຖານທີ່ກຳບັງລະ ການກະທຳຂອງນາງນັ່ນ ບໍ່ເປັນໄປເພື່ອຄວາມ ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນລັຕິ

ຜາ. ໔. ອີກຢ່າງ ພິກຂຸນີໃດ ກັບບຸຣຸຫນຶ່ງຕໍ່ນຶ່ງ ຢືນຮ່ວມກໍດີ ເຈຣຈາຮ່ວມກໍດີ ໃນສຖານ ທີ່ກຳບັງ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸນີອັນເຕວາສິນີຂອງພຣະພັທທາກາປິລານີເຖຣີ ຈົບ.

ສິກຂາບົທວິພັງຄ໌

[໑໗໘] ບົທວ່າ ອີກຢ່າງ .. ໃດ ຄວາມວ່າຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ພິກຂຸນີ ຄວາມວ່າ ທີ່ຊື່ວ່າ ພິກຂຸນີ ເພາະອັຖວ່າເປັນຜູ້ຂໍ .. ນີ້. ຊື່ວ່າ ພິກຂຸນີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ສຖານທີ່ກຳບັງ ໄດ້ແກ່ ສຖານທີ່ທີ່ເຂົາບັງດ້ວຍຝາ ບານປະຕູ ລຳແພນ ມ່ານ ຕົ້ນໄມ້ ເສົາ ຫຼືລາງເຂົ້າ ຢ່າງໃດຢ່າງນຶ່ງ.

ທີ່ຊື່ວ່າ ບຸຣຸษ ໄດ້ແກ່ ມນຸษຍ໌ຜູ້ຊາຍ ບໍ່ແມ່ນຍັກษ໌ຜູ້ຊາຍ ບໍ່ແມ່ນເປຕຜູ້ຊາຍ ບໍ່ແມ່ນສັຕວ໌ດິຣັຈฉານ ໂຕຜູ້ ເປັນບຸຄຄົລຜູ້ຮູ້ຄວາມ ເປັນຜູ້ສາມາຖ ຈະຢືນຮ່ວມ ເຈຣຈາຮ່ວມໄດ້.

ບົທວ່າ ກັບ ຄື ດ້ວຍກັນ.

ຄຳວ່າ ນຶ່ງຕໍ່ນຶ່ງ ຄື ບຸຣຸษຜູ້ນຶ່ງ ແລະພິກຂຸຕີອົງຄ໌ນຶ່ງ

ບົທວ່າ ຢືນຮ່ວມກໍດີ ຄື ຢືນຢູ່ໃນຣະຍະຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ເຈຣຈາຮ່ວມກັນກໍດີ ຄື ເຈຣຈາໃນຣະຍະຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ຢືນຮ່ວມຫຼືເຈຣຈາຮ່ວມ ພົ້ນຊ່ວງຣະຍະແຂນ ຕ້ອງອາບັຕິທຸກກົฎ.

ຢືນຮ່ວມຫຼືເຈຣຈາຮ່ວມກັບຍັກษ໌ຜູ້ຊາຍ ເປຕຜູ້ຊາຍ ບັຕເຖາະກ໌ ຫຼືສັຕວ໌ດິຣັຈฉານໂຕຜູ້ມີຮ່າງກາຍເໝືອນມນຸษຍ໌ ຕ້ອງອາບັຕິທຸກກົฎ.

ອນາບັຕຕິວາຣ

[໑໗໐] ມີສຕຣີຜູ້ຮູ້ຄວາມຄົນໃດຄົນນຶ່ງຢູ່ເປັນເພື່ອນ ໑ ບໍ່ເພ່ງທີ່ລັບຢືນຮ່ວມຫຼືເຈຣຈາຮ່ວມ ໑ ສົ່ງໃຈໄປອື່ນ ຢືນຮ່ວມຫຼືເຈຣຈາຮ່ວມ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ອັນສກາຣວັຄຄ໌ ສິກຂາບົທທີ່ ໔ ຈົບ.

ອັນຮກາຣວັຄຄ໌ ສິກຂາບົທທີ່ ၆

ເຣື່ອງກິກຂຸຕີອັນເຕວາສິນີຂອງພຣະກັທທາກາປິລານີເຖຣີ

[໑໙໑] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທຮເຈົ້າປະທັບຢູ່ ໓ ພຣະເຊຕວັນ ອາຮາມຂອງອນາຖບິດາທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ຍາຕິຜູ້ຊາຍຂອງກິກຂຸຕີອັນເຕວາສິນີແຫ່ງພຣະກັທທາກາປິລານີເຖຣີ ໄດ້ຈາກບ້ານໄປສູ່ພຣະນຄຣສາວັຕຖີດ້ວຍກຣຕີຍກິຈບາງຢ່າງ ຝ່າຍກິກຂຸຕີນັ້ນຮູ້ແລ້ວວ່າ ພຣະຜູ້ມີພຣະກາຄຫຣົງຫ້າມກາຣຍືນຮ່ວມ ເຈຣຈາຮ່ວມ ກັບບຸຣຸษນຶ່ງຕໍ່ນຶ່ງ ໃນສຖານທີ່ກຳບັງ ຈຶ່ງຍືນຮ່ວມແດ່ ເຈຣຈາຮ່ວມແດ່ ກັບບຸຣຸษຄົນນັ້ນແຫລະນຶ່ງຕໍ່ນຶ່ງ ໃນສຖານທີ່ແຈ້ງ.

ບັຣດາກິກຂຸຕີທີ່ເປັນຜູ້ມັກນ້ອຍ .. ຕ່າງພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີຈຶ່ງໄດ້ຍືນຮ່ວມແດ່ ເຈຣຈາຮ່ວມແດ່ ກັບບຸຣຸษນຶ່ງຕໍ່ນຶ່ງ ໃນສຖານທີ່ແຈ້ງລະ.

ຫຣົງສອບຖາມ

ພຣະຜູ້ມີພຣະກາຄຫຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າກິກຂຸຕີຍືນຮ່ວມແດ່ເຈຣຈາຮ່ວມແດ່ ກັບບຸຣຸษນຶ່ງຕໍ່ນຶ່ງ ໃນສຖານທີ່ແຈ້ງ ແທ້ບໍ່?

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທຮເຈົ້າຂ້ານ້ອຍ.

ຫຣົງຕິຕຽນແລ້ວບັນຍັດສິກຂາບົທ

ພຣະຜູ້ມີພຣະກາຄພຸທຮເຈົ້າຫຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ເປັນຫຍັງກິກຂຸຕີຈຶ່ງໄດ້ຍືນຮ່ວມແດ່ເຈຣຈາຮ່ວມແດ່ ກັບບຸຣຸษນຶ່ງຕໍ່ນຶ່ງ ໃນສຖານທີ່ແຈ້ງລະ ກາຣກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈຶ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນຍັດ

໖໗. ၆. ອີກຢ່າງ ກິກຂຸຕີໃດ ກັບບຸຣຸษນຶ່ງຕໍ່ນຶ່ງ ຍືນຮ່ວມກໍດີ ເຈຣຈາຮ່ວມກໍດີ ໃນສຖານທີ່ແຈ້ງ ເປັນປາຈິຕຕີຍ໌.

ເຣື່ອງກິກຂຸຕີອັນເຕວາສິນີຂອງພຣະກັທທາກາປິລານີເຖຣີ ຈົບ.

ສິກຂາບົທວິກັງຄ໌

[໑໙໒] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້. ຊື່ວ່າ ກິກຂຸຕີທີ່ຫຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ສຖານທີ່ແຈ້ງ ໄດ້ແກ່ ສຖານທີ່ອັນບໍ່ໄດ້ກຳບັງດ້ວຍສິ່ງໃດສິ່ງນຶ່ງຄື ຝາ ບານປະຕູ ລຳແພນ ມ່ານ ຕົ້ນໄມ້ ເສົາ ຫຼືລາງເຂົ້າ.

ທີ່ຊື່ວ່າ ບຸຣຸษ ໄດ້ແກ່ ມນຸษย໌ຜູ້ຊາຍ ບໍ່ແມ່ນຍັກษ໌ຜູ້ຊາຍ ບໍ່ແມ່ນເປຕຜູ້ຊາຍ ບໍ່ແມ່ນສັຕວ໌ດິຣັຈฉານໂຕຜູ້ ເປັນບຸຄຄົລຜູ້ຮູ້ຄວາມ ເປັນຜູ້ສາມາຖຈະຢືນຮ່ວມ ເຈຣຈາຮ່ວມໄດ້.

ບົທວ່າ ກັບ ຄື ດ້ວຍກັນ.

ບົທວ່າ ນຶ່ງຕໍ່ນຶ່ງ ຄື ບຸຣຸษຜູ້ນຶ່ງ ແລະພິກຂຸຕີອົງຄ໌ນຶ່ງ.

ບົທວ່າ ຢືນຮ່ວມກໍດີ ຄື ຢືນຢູ່ໃນຣະຍະຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ເຈຣຈາຮ່ວມກໍດີ ຄື ເຈຣຈາຢູ່ໃນຣະຍະຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ຢືນຮ່ວມຫຼືເຈຣຈາຮ່ວມ ພົ້ນຣະຍະຊ່ວງແຂນ ຕ້ອງອາບັຕິທຸກກົฏ.

ຢືນຮ່ວມຫຼືເຈຣຈາຮ່ວມ ກັບຍັກษ໌ຜູ້ຊາຍ ບັຕເທາະກ໌ ຫຼືສັຕວ໌ດິຣັຈฉານໂຕຜູ້ມີຮ່າງກາຍເໝືອນມນຸษย໌ ຕ້ອງອາບັຕິທຸກກົฏ.

ອນາປັຕຕິວາຣ

[໑໙໓] ມີສຕຣີຜູ້ຮູ້ຄວາມຄົນໃດຄົນນຶ່ງຢູ່ເປັນເພື່ອນ ໑ ບໍ່ເພ່ງທີ່ລັບ ຢືນຮ່ວມຫຼືເຈຣຈາຮ່ວມ ໑ ສົ່ງໃຈໄປອື່ນ ຢືນຮ່ວມຫຼືເຈຣຈາຮ່ວມ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑໐ ບໍ່ຕ້ອງອາບັຕິແລ.

ອັນສກາຣວັຄຄ໌ ສິກຂາບົທທີ່ ໓ ຈົບ.

ອັນธภາຣວັຄຄ໌ ສິກຂາບົທທີ່ ๘

ເຣື່ອງພິກຂຸຓີຖຸລລນັນທາ

[໑໗໔] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນ ອາຣາມຂອງອນາຖບິຕຄິກຄຫບໍດີ ເຂຕພຣະນຄຣສາວັຕຖີ ຄັ້ງນັ້ນ ພິກຂຸຓີຖຸລລນັນທາ ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກະຊິບໃກ້ຫູແດ່ ກັບບຸຣຸษ ນຶ່ງຕໍ່ນຶ່ງ ໃນຖນົນແດ່ ໃນຮ່ອມຕັນແດ່ ໃນທາງສາມແຍກແດ່ ສົ່ງພິກຂຸຓີຜູ້ເປັນເພື່ອນກັບໄປແດ່.

บັຣດາພິກຂຸຓີທີ່ເປັນຜູ້ມັກນ້ອຍ .. ຕ່າງພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງຍາແມ່ຖຸລລນັນທາຈຶ່ງໄດ້ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກະຊິບໃກ້ຫູແດ່ ກັບບຸຣຸษນຶ່ງຕໍ່ນຶ່ງ ໃນຖນົນແດ່ ໃນຮ່ອມຕັນແດ່ ໃນທາງສາມແຍກແດ່ ສົ່ງພິກຂຸຓີຜູ້ເປັນເພື່ອນກັບໄປແດ່ລະ.

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພິກຂຸຓີຖຸລລນັນທາ ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກະຊິບໃກ້ຫູແດ່ ກັບບຸຣຸษນຶ່ງຕໍ່ນຶ່ງ ໃນຖນົນແດ່ ໃນຮ່ອມຕັນແດ່ ໃນທາງສາມແຍກແດ່ ສົ່ງພິກຂຸຓີຜູ້ເປັນເພື່ອນກັບໄປແດ່ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນຍັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸຓີຖຸລລນັນທາຈຶ່ງໄດ້ຢືນຮ່ວມແດ່ ເຈຣຈາຮ່ວມແດ່ ກະຊິບໃກ້ຫູແດ່ ກັບບຸຣຸษນຶ່ງຕໍ່ນຶ່ງ ໃນຖນົນແດ່ ໃນຮ່ອມຕັນແດ່ໃນທາງສາມແຍກແດ່ ສົ່ງພິກຂຸຓີຜູ້ເປັນເພື່ອນກັບໄປແດ່ລະ ກາຣກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ.

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸຓີທັ້ງຫຼາຍຈຶ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນຍັຕິ

ຜລ. ๘. ອີກຢ່າງ ພິກຂຸຓີໃດ ຢືນຮ່ວມກໍດີ ເຈຣຈາຮ່ວມກໍດີ ກະຊິບໃກ້ຫູກໍດີ ກັບບຸຣຸษ ນຶ່ງຕໍ່ນຶ່ງ ໃນຖນົນກໍດີ ໃນຮ່ອມຕັນກໍດີ ໃນທາງສາມແຍກກໍດີ ສົ່ງພິກຂຸຓີຜູ້ເປັນເພື່ອນກັບໄປກໍດີ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸຓີຖຸລລນັນທາ ຈົບ.

ສິກຂາບົທວິພັງຄ໌

[໑໙໕] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ພິກຂຸຕີ ຄວາມວ່າ ທີ່ຊື່ວ່າ ພິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້. ຊື່ວ່າ ພິກຂຸຕີ ທີ່ທຮົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ຖນົນ ໄດ້ແກ່ ທາງເດີນ.

ທີ່ຊື່ວ່າ ຮ່ອມຕັນ ໄດ້ແກ່ ທາງທີ່ເຂົ້າທາງໃດອອກທາງນັ້ນ.

ທີ່ຊື່ວ່າ ທາງສາມແຍກ ໄດ້ແກ່ຊຸມທາງທີ່ທ່ຽວຫຼີ້ນ.

ທີ່ຊື່ວ່າ ບຸຣຸษ ໄດ້ແກ່ ມນຸษຍ໌ຜູ້ຊາຍ ບໍ່ແມ່ນຍັກษ໌ຜູ້ຊາຍ ບໍ່ແມ່ນເປຕຜູ້ຊາຍ ບໍ່ແມ່ນສັຕວ໌ດິຣັຈສານໂຕຜູ້ ເປັນບຸຄຄົລຜູ້ຮູ້ຄວາມ ເປັນຜູ້ສາມາຖຈະຢືນຮ່ວມ ເຈຣຈາຮ່ວມໄດ້.

ບົທວ່າ ກັບ ຄືດ້ວຍກັນ.

ບົທວ່າ ນຶ່ງຕໍ່ນຶ່ງ ຄື ບຸຣຸษຜູ້ນຶ່ງ ແລະພິກຂຸຕີອີກອົງຄ໌ນຶ່ງ.

ບົທວ່າ ຢືນຮ່ວມກໍດີ ຄື ຢືນຮ່ວມໃນຣະຍະຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ເຈຣຈາຮ່ວມກໍດີ ຄື ເຈຣຈາຢູ່ໃນຣະຍະຊ່ວງແຂນຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ກະຊິບໃກ້ຫູກໍດີ ຄື ບອກເນື້ອຄວາມໃກ້ຫູຂອງບຸຣຸษ ຕ້ອງອາບັຕິປາຈິຕຕີຍ໌.

ພາກຍ໌ວ່າ ສົ່ງພິກຂຸຕີຜູ້ເປັນເພື່ອນກັບໄປກໍດີ ຄື ປະສົງຄ໌ຈະປະພຶຕອນາຈາຣ ຈຶ່ງສົ່ງພິກຂຸຕີຜູ້ເປັນເພື່ອນກັບໄປ ຕ້ອງອາບັຕິທຸກກົฎ. ເມື່ອພິກຂຸຕີຜູ້ເປັນເພື່ອນລະໄປໃກ້ຈະພົ້ນສາຍຕາ ຫຼືສຸດສຽງສັ່ງ ຕ້ອງອາບັຕິທຸກກົฎ. ເມື່ອພິກຂຸຕີຜູ້ເປັນເພື່ອນພົ້ນໄປແລ້ວ ຕ້ອງອາບັຕິປາຈິຕຕີຍ໌.

ຢືນຮ່ວມ ຫຼືເຈຣຈາຮ່ວມ ພົ້ນຣະຍະຊ່ວງແຂນ ຕ້ອງອາບັຕິທຸກກົฎ.

ຢືນຮ່ວມ ຫຼືເຈຣຈາຮ່ວມ ກັບຍັກษ໌ຜູ້ຊາຍ ເປຕຜູ້ຊາຍ ບັຒເຫາະກ໌ ຫຼືສັຕວ໌ດິຣັຈສານໂຕຜູ້ ມີຮ່າງກາຍເໝືອນມນຸษຍ໌ ຕ້ອງອາບັຕິທຸກກົฎ.

ອນາປັຕຕິວາຣ

[໑໙໖] ມີສຕຣີຜູ້ຮູ້ຄວາມຄົນໃດຄົນນຶ່ງຢູ່ເປັນເພື່ອນ ໑ ບໍ່ເພ່ງທີ່ລັບ ຢືນຮ່ວມຫຼືເຈຣຈາຮ່ວມ ໑ ສົ່ງໃຈໄປອື່ນ ຢືນຮ່ວມຫຼືເຈຣຈາຮ່ວມ ໑ ບໍ່ປະສົງຄ໌ຈະປະພຶຕອນາຈາຣ ມີກິຈຈຳເປັນຈຶ່ງສົ່ງພິກຂຸຕີຜູ້ເພື່ອນກັບ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ອັນສກາຣວັຄຄ໌ ສິກຂາບົທທີ່ ໔ ຈົບ.

ອັນສກາຣວັຄຄ໌ ສິກຂາບົທທີ່ ๕

ເຣື່ອງກິກຂຸຕີອົງຄ໌ນຶ່ງ

[໑໘໗] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນອາຣາມຂອງອນາຄ ບິຕຄິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ກິກຂຸຕີອົງຄ໌ນຶ່ງເປັນກຸລຸປິກາຂອງຕະກຸລແຫ່ງນຶ່ງ ຮັບ ກັຕຕາຫາຣເປັນປະຈຳ ຈຶ່ງກິກຂຸຕີນັ້ນເມື່ອເວລາເຊົ້າ ຄອງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣ ເດີນຜ່ານເຂົ້າ ໄປຫາງຕະກຸລນັ້ນ ເມື່ອເຖິງຈຶ່ງນັ່ງເທິງອາສນະແລ້ວບໍ່ບອກລາເຈົ້າຂອງບ້ານກັບໄປ ທາສີແຫ່ງຕະກຸລນັ້ນ ມົວສາລະວົນເກັບກວາດເຮືອນ ໄດ້ເກັບອາສນະນັ້ນລົງໃນກະໂຖນ ຄົນໃນບ້ານບໍ່ເຫັນອາສນະ ຈຶ່ງຖາມ ກິກຂຸຕີນັ້ນວ່າ ຂ້າແຕ່ຍາແມ່ ອາສນະນັ້ນຢູ່ທີ່ໃດ?

ກິກຂຸຕີນັ້ນປຕິເສຣວ່າ ອາວຸໂສ ຂ້ານ້ອຍບໍ່ເຫັນອາສນະນັ້ນ.

ຄົນເຫລົ່ານັ້ນກ່າວຄາດຄັ້ນວ່າ ຂ້າແຕ່ຍາແມ່ ຂໍທ່ານຈົ່ງໃຫ້ອາສນະນັ້ນ ດັ່ງນີ້ແລ້ວ ໄດ້ບອກເລີກ ຖວາຍກັຕຕາຫາຣປະຈຳ ກາຍຫລັງເຂົາຊຳຣະເຮືອນພົບອາສນະນັ້ນຢູ່ໃນກະໂຖນ ຈຶ່ງຂໍຂມາໂທษກິກຂຸຕີນັ້ນ ແລ້ວໄດ້ເຣີ່ມຕົ້ນຖວາຍກັຕຕາຫາຣປະຈຳຕໍ່ໄປ.

ສ່ວນກິກຂຸຕີນັ້ນໄດ້ລະເຣື່ອງນັ້ນແກ່ກິກຂຸຕີທັ້ງຫຼາຍ. ບັຣດາກິກຂຸຕີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍ ເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸຕີເຂົ້າສູ່ຕະກຸລໃນເວລາ ກ່ອນອາຫາຣນັ່ງເທິງອາສນະແລ້ວ ຈຶ່ງ ບໍ່ໄດ້ບອກລາເຈົ້າຂອງບ້ານກ່ອນກັບລະ ...

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າ ກິກຂຸຕີເຂົ້າ ສູ່ຕະກຸລໃນເວລາກ່ອນອາຫາຣ ນັ່ງເທິງອາສນະແລ້ວ ບໍ່ບອກລາເຈົ້າຂອງບ້ານກ່ອນກັບ ແທ້ບໍ່?

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນລັດຕິສິກຂາບົທ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ເປັນຫຍັງກິກຂຸຕີເຂົ້າສູ່ຕະກຸລໃນ ເວລາກ່ອນອາຫາຣ ນັ່ງເທິງອາສນະແລ້ວ ຈຶ່ງໄດ້ບໍ່ບອກລາເຈົ້າຂອງບ້ານກ່ອນກັບລະ ກາຣກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາກິກຂຸທັ້ງຫຼາຍ ກໍແລກິກຂຸຕີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນລັຕີ

ກຸ໐. ໕. ອີກຍ່າງ ກິກຂຸຕີໃດ ເຂົ້າໄປສູ່ຕະກຸລທັ້ງຫຼາຍ ໃນເວລາກ່ອນອາຫາຣ ນັ່ງເທິງອາສນະ ແລ້ວ ບໍ່ບອກລາເຈົ້າຂອງບ້ານ ຫລີກໄປ ເປັນປາຈິຕຕີຍ໌.

ເຣື່ອງກິກຂຸຕີອົງຄ໌ນຶ່ງ ຈົບ.

ສິກຂາບົທວິກັງຄ໌

[໑໙໗] ບົທວ່າ ອີກຍ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້. ຊື່ວ່າ ກິກຂຸຕີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ເວລາກ່ອນອາຫາຣ ຄືເວລາອຣຸຕຂຶ້ນຈົນເຖິງທ່ຽງ.

ທີ່ຊື່ວ່າ ຕະກຸລ ໄດ້ແກ່ຕະກຸລ ໔ ຄື ຕະກຸລກັບັຕຣິຍ໌ຕະກຸລພຣາຫ໌ມຕ໌ຕະກຸລແພສຍ໌ ຕະກຸລສູທຣ໌.

ບົທວ່າ ເຂົ້າໄປ ຄື ໄປໃນຕະກຸລນັ້ນ.

ທີ່ຊື່ວ່າ ອາສນະ ໄດ້ແກ່ ເອກເທສທີ່ເຂົາເອີ້ນກັນວ່າທີ່ສຳຫຼັບນັ່ງພັບຂັດຕະມາດ.

ບົທວ່າ ນັ່ງ ຄື ນັ່ງເທິງອາສນະນັ້ນ.

ຄຳວ່າ ບໍ່ບອກລາເຈົ້າຂອງບ້ານ ຫລີກໄປ ຄວາມວ່າ ບໍ່ອຳລາຄົນໃນຕະກຸລນັ້ນຊຶ່ງເປັນເຈົ້າຂອງຖວາຍ.

ເດີນພົ້ນຊາຍຄາ ຕ້ອງອາບັຕິປາຈິຕຕີຍ໌. ໃນທີ່ແຈ້ງ ເດີນລ່ວງອຸປຈາຣ ຕ້ອງອາບັຕິປາຈິຕຕີຍ໌.

ບົທກາຊນີຍ໌

ຕິກະປາຈິຕຕີຍ໌

[໑໙໘] ຍັງບໍ່ໄດ້ບອກລາ ກິກຂຸຕີສຳຄັນວ່າ ຍັງບໍ່ໄດ້ບອກລາ ຫລີກໄປ ຕ້ອງອາບັຕິປາຈິຕຕີຍ໌.

ຍັງບໍ່ໄດ້ບອກລາ ກິກຂຸຕີສົງສັຍ ຫລີກໄປ ຕ້ອງອາບັຕິປາຈິຕຕີຍ໌.

ຍັງບໍ່ໄດ້ບອກລາ ກິກຂຸຕີສຳຄັນວ່າ ບອກລາແລ້ວ ຫລີກໄປ ຕ້ອງອາບັຕິປາຈິຕຕີຍ໌.

ຕິກະທຸກກົຕ

ບໍ່ແມ່ນສຖານທີ່ສຳຫຼັບນັ່ງພັບຂັດຕະມາດ ຕ້ອງອາບັຕິທຸກກົຕ.

ບອກລາແລ້ວ ກິກຂຸຕີສຳຄັນວ່າ ຍັງບໍ່ໄດ້ບອກລາ ຕ້ອງອາບັຕິທຸກກົຕ.

ບອກລາແລ້ວ ກິກຂຸຕີສົງສັຍ ຕ້ອງອາບັຕິທຸກກົຕ.

ບໍ່ຕ້ອງອາບັຕິ

ບອກລາແລ້ວ ກິກຂຸຕີສຳຄັນວ່າບອກລາແລ້ວ ບໍ່ຕ້ອງອາບັຕິ.

ອນາປັຕຕິວາຣ

[໔໐໐] ບອກລາແລ້ວໄປ ໑ ອາສນະເຄຼື່ອນທີ່ບໍ່ໄດ້ ໑ ອາພາສ ໑ ມີອັນຕຣາຍ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ອັນສກາຣວັຄຄ໌ ສິກຂາບົທທີ່ ໕ ຈົບ.

ອັນທະກາຣວັຄຄ໌ ສິກຂາບົທທີ່ ໒

ເຣື່ອງພິກຂຸນີຖຸລລນັນທາ

[໘໐໑] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນອາຣາມຂອງອນາຖ ບິຕທິກາຄຫບໍດີ ເຂຕພຣະນຄຣສາວັຕຖີ ຄັ້ງນັ້ນ ພິກຂຸນີຖຸລລນັນທາ ເຂົ້າໄປສູ່ຕະກຸລໃນເວລາຫລັງອາຫາຣ ແລ້ວນັ່ງແດ່ ນອນແດ່ ເທິງອາສນະ ບໍ່ບອກກ່າວເຈົ້າຂອງບ້ານ ຄົນໃນບ້ານເຊີນພິກຂຸນີຖຸລລນັນທາ ບໍ່ກ້ານັ່ງ ບໍ່ກ້ານອນເທິງອາສນະ ເຂົາຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງຍາແມ່ຖຸລລນັນທາຈຶ່ງ ໄດ້ເຂົ້າໄປສູ່ຕະກຸລໃນເວລາຫລັງອາຫາຣ ແລ້ວນັ່ງແດ່ ນອນແດ່ ເທິງອາສນະ ບໍ່ບອກກ່າວເຈົ້າຂອງບ້ານ ລະ ...

ພິກຂຸນີ ທັ້ງຫຼາຍໄດ້ຍິນຄົນພວກນັ້ນ ພາກັນເພ່ງໂທษ ຕິຕຽນ ໂພນທະນາຢູ່. ບັຣດາທີ່ ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງຍາແມ່ຖຸລລນັນທາ ຈຶ່ງໄດ້ເຂົ້າໄປສູ່ຕະກຸລໃນ ເວລາຫລັງອາຫາຣ ແລ້ວນັ່ງແດ່ ນອນແດ່ ເທິງອາສນະ ບໍ່ບອກກ່າວເຈົ້າຂອງບ້ານລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າ ພິກຂຸນີ ຖຸລລນັນທາເຂົ້າໄປສູ່ຕະກຸລໃນເວລາຫລັງອາຫາຣ ແລ້ວນັ່ງແດ່ ນອນແດ່ ເທິງອາສນະ ບໍ່ບອກກ່າວເຈົ້າຂອງ ບ້ານແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນຍັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸນີຖຸລລນັນທາຈຶ່ງໄດ້ ເຂົ້າໄປສູ່ຕະກຸລໃນເວລາຫລັງອາຫາຣ ແລ້ວນັ່ງແດ່ ນອນແດ່ ເທິງອາສນະບໍ່ບອກກ່າວເຈົ້າຂອງບ້ານລະ ການກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍຈຶ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ວ່າດັ່ງນີ້:

ພຣະບັນຍັຕິ

ກ໑. ໒. ອີກຢ່າງ ພິກຂຸນີໃດ ເຂົ້າໄປສູ່ຕະກຸລໃນເວລາຫລັງອາຫາຣບໍ່ບອກກ່າວພວກເຈົ້າຂອງ ບ້ານ ນັ່ງກໍດີ ນອນກໍດີ ເທິງອາສນະ ເປັນປາຈິຕຕິຍ໌.

ເຣື່ອງພິກຂຸນີຖຸລລນັນທາ ຈົບ.

ສິກຂາບົທວິພັງຄ໌

[໘໐໘] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ກິກຂຸຕີ ຄວາມວ່າ ທີ່ຊື່ວ່າ ກິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້. ຊື່ວ່າ ກິກຂຸຕີ ທີ່ທຣົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ເວລາຫລັງອາຫາຣ ໄດ້ແກ່ເວລາທ່ຽງລ່ວງໄປແລ້ວ ຕາບເທົ່າພຣະອາທິຕຍ໌ອັສດົງຄົຕ.

ທີ່ຊື່ວ່າ ຕະກຸລ ໄດ້ແກ່ຕະກຸລ ໔ ຄື ຕະກຸລກະສັຕຣິຍ໌ ຕະກຸລພຣາຫ໌ມຕ໌ຕະກຸລແພສຍ໌ ຕະກຸລສູທຣ໌

ບົທວ່າ ເຂົ້າໄປ ຄື ໄປໃນຕະກຸລນັ້ນ.

ຄຳວ່າ ບໍ່ບອກກ່າວພວກເຈົ້າຂອງບ້ານ ຄື ບໍ່ບອກຄົນໃນຕະກຸລນັ້ນຊຶ່ງເປັນເຈົ້າຂອງຖວາຍ.

ທີ່ຊື່ວ່າ ອາສນະ ໄດ້ແກ່ສຖານທີ່ເຂົາເອີ້ນກັນວ່າແທ່ນຫຼືຕຽງອັນວ່າງ.

ບົທວ່າ ນັ່ງ ນັ່ງລົງເທິງອາສນະນັ້ນ ຕ້ອງອາບັຕິປາຈິຕຕິຍ໌.

ບົທວ່າ ນອນ ຄື ນອນລົງເທິງອາສນະນັ້ນ ຕ້ອງອາບັຕິປາຈິຕຕິຍ໌.

ບົທກາຊນີຍ໌

ຕິກະປາຈິຕຕິຍ໌

[໔໐໓] ບໍ່ໄດ້ບອກກ່າວ ກິກຂຸຕີສຳຄັນວ່າບໍ່ໄດ້ບອກກ່າວ ນັ່ງກໍດີ ນອນກໍດີ ເທິງອາສນະ ຕ້ອງອາບັຕິປາຈິຕຕິຍ໌.

ບໍ່ໄດ້ບອກກ່າວ ກິກຂຸຕີສົງສັຍ ນັ່ງກໍດີ ນອນກໍດີ ເທິງອາສນະ ຕ້ອງອາບັຕິປາຈິຕຕິຍ໌.

ບໍ່ໄດ້ບອກກ່າວກິກຂຸຕີສຳຄັນວ່າບອກກ່າວແລ້ວ ນັ່ງກໍດີ ນອນກໍດີ ເທິງອາສນະຕ້ອງອາບັຕິ ປາຈິຕຕິຍ໌.

ຕິກະທຸກກົຜ

ນັ່ງ ໓ ສຖານອັນບໍ່ແມ່ນແທ່ນຫຼືຕຽງ ຕ້ອງອາບັຕິທຸກກົຜ.

ບອກກ່າວແລ້ວ ກິກຂຸຕີສຳຄັນວ່າຍັງບໍ່ໄດ້ບອກກ່າວ ຕ້ອງອາບັຕິທຸກກົຜ.

ບອກກ່າວແລ້ວ ກິກຂຸຕີສົງສັຍ ຕ້ອງອາບັຕິທຸກກົຜ.

ບໍ່ຕ້ອງອາບັຕິ

ບອກກ່າວແລ້ວ ກິກຂຸຕີສຳຄັນວ່າບອກກ່າວແລ້ວ ບໍ່ຕ້ອງອາບັຕິ.

ອນາປັຕຕິວາຣ

[໔໐໔] ບອກແລ້ວ ນັ່ງກໍດີ ນອນກໍດີ ເທິງອາສນະ ໑ ເທິງອາສນະທີ່ເຂົາປູໄວ້ເປັນປະຈຳ ໑ ອາພາຣ ໑ ມີອັນຕຣາຍ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ອັນຂກາຣວັຄຄ໌ ສິກຂາບົທທີ່ ໖ ຈົບ.

ອັນສການວັຄຄ໌ ສິກຂາບົທທີ່ ໆ
ເຣື່ອງພິກຂຸຕີຫຼາຍອົງຄ໌

[໔໐໕] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໓ ພຣະເຊຕວັນອາຣາມຂອງ ອນາຖບິຕທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ພິກຂຸຕີຫຼາຍອົງຄ໌ພາກັນໄປສູ່ພຣະນຄຣສາວັຕຖີໃນ ໂກສົລຊົນບົທ ພໍເຂົ້າເຖິງບ້ານຫມູ່ນຶ່ງໃນຍາມແລງໄດ້ເຂົ້າສູ່ຕະກຸລພຣາຫ໌ມນ໌ຕະກຸລນຶ່ງ ຂໍທີ່ພັກແຮມ. ຈຶ່ງ ພຣາຫ໌ມຕີໄດ້ກ່າວຄຳນີ້ກັບພິກຂຸຕີເຫລົ່ານັ້ນວ່າ ຍາແມ່ທັ້ງຫຼາຍ ຂໍໄດ້ໂປຼດຖ້າຈົນກວ່າທ່ານພຣາຫ໌ມຕ໌ ຈະມາ.

ພິກຂຸຕີທັ້ງຫຼາຍກ່າວວ່າ ຈົນກວ່າທ່ານພຣາຫ໌ມນ໌ຈະມາ ດັ່ງນີ້ ແລ້ວໄດ້ຈັດປູເຄື່ອງສຳຫຼັບ ນອນ ແລ້ວແດ່ພວກນັ່ງ ບາງພວກນອນ.

ຕົກຄ່ຳພຣາຫ໌ມນ໌ມາເຫັນແລ້ວໄດ້ຖາມພຣາຫ໌ມຕີນັ້ນວ່າ ສຕຣີເຫລົ່ານີ້ຄືໃຜກັນ? ພຣາຫ໌ມຕີ ຕອບວ່າ ພິກຂຸຕີເຈົ້າຂ້ານ້ອຍ.

ພຣາຫ໌ມນ໌ກ່າວວ່າ ຈົ່ງຂັບໄລ່ໄປ ສຕຣີຫົວໂລ້ນເຫລົ່ານີ້ເປັນລົງເສເພ ດັ່ງນີ້ ແລ້ວໃຫ້ຂັບໄລ່ ອອກຈາກເຮືອນໄປ.

ເມື່ອພິກຂຸຕີເຫລົ່ານັ້ນໄປເຖິງພຣະນຄຣສາວັຕຖີແລ້ວ ໄດ້ລະເຣື່ອງນັ້ນແກ່ພິກຂຸຕີທັ້ງຫຼາຍ. ບັຣດາ ພິກຂຸຕີທີ່ເປັນຜູ້ມັກນ້ອຍ .. ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸຕີທັ້ງຫຼາຍຈຶ່ງໄດ້ເຂົ້າ ສູ່ຕະກຸລໃນເວລາວິການ ແລ້ວບໍ່ບອກເຈົ້າຂອງບ້ານ ປູເອງແດ່ໃຫ້ຜູ້ອື່ນປູແດ່ ຊຶ່ງສາດເສື່ອ ແລ້ວ ນັ່ງແດ່ນອນແດ່ລະ ...

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພິກຂຸຕີທັ້ງຫຼາຍ ເຂົ້າສູ່ຕະກຸລໃນເວລາວິການ ແລ້ວບໍ່ບອກພວກເຈົ້າຂອງບ້ານ ປູເອງແດ່ ໃຫ້ຜູ້ອື່ນປູແດ່ ຊຶ່ງເຄື່ອງ ນອນ ແລ້ວນັ່ງແດ່ ນອນແດ່ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັญญັຕິສິກຂາບົທ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸຕີທັ້ງຫຼາຍຈຶ່ງໄດ້ເຂົ້າ ສູ່ຕະກຸລໃນເວລາວິການ ແລ້ວບໍ່ບອກພວກເຈົ້າຂອງບ້ານ ປູສາດເສື່ອເອງແດ່ ໃຫ້ຜູ້ອື່ນປູສາດເສື່ອແດ່ ຊຶ່ງສາດ ເສື່ອແລ້ວນັ່ງແດ່ ນອນແດ່ລະ ການກະທຳຂອງພວກນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງ ບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

พระบัญญัติ

໗໔. ໗. ອີກຢ່າງ ພິກຂຸນີໃດ ເຂົ້າໄປສູ່ຕະກຸລທັ້ງຫຼາຍ ໃນເວລາວິກາລ ບໍ່ບອກພວກເຈົ້າຂອງບ້ານ ປູສາດເສື່ອກໍດີ ໃຫ້ປູສາດເສື່ອກໍດີ ຊຶ່ງສາດເສື່ອ ແລ້ວນັ່ງກໍດີ ນອນກໍດີ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸນີຫຼາຍອົງຄ໌ ຈົບ.

ສິກຂາບົທວິພັງຄ໌

[໔໐໖] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ພິກຂຸນີ ຄວາມວ່າ ທີ່ຊື່ວ່າ ພິກຂຸນີ ເພາະອັຖວ່າເປັນຜູ້ຂໍ .. ນີ້. ຊື່ວ່າ ພິກຂຸນີ ທີ່ທຮົງປະສົງຄ໌ໃນອັຖນີ້.

ທີ່ຊື່ວ່າ ເວລາວິກາລ ໄດ້ແກ່ ເວລາຕັ້ງແຕ່ອາທິຕຍ໌ອັສດົງຄົຕຕາບເທົ່າເຖິງອຣຸຓຂຶ້ນ.

ທີ່ຊື່ວ່າ ຕະກຸລ ໄດ້ແກ່ ຕະກຸລ ໔ ຄື ຕະກຸລກษັຕຣິຍ໌ ຕະກຸລພຣາຫ໌ມຓ໌ຕະກຸລແພศຍ໌ ຕະກຸລศູທຣ໌.

ບົທວ່າ ເຂົ້າໄປ ຄື ໄປໃນຕະກຸລນັ້ນ.

ຄຳວ່າ ບໍ່ບອກພວກເຈົ້າຂອງບ້ານ ຄື ບໍ່ບອກຄົນໃນຕະກຸລນັ້ນຊຶ່ງເປັນເຈົ້າຂອງຖວາຍ.

ທີ່ຊື່ວ່າ ສາດເສື່ອ ໄດ້ແກ່ ເຄື່ອງປູ ໂດຍທີ່ສຸດແມ້ສາດເສື່ອທີ່ເຮັດດ້ວຍໃບໄມ້.

ບົທວ່າ ປູ ຄື ປູສາດເສື່ອເອງ.

ບົທວ່າ ໃຫ້ປູ ຄື ໃຊ້ຄົນອື່ນປູ.

ບົທວ່າ ນັ່ງ ຄື ນັ່ງເທິງສາດເສື່ອສາດເສື່ອນັ້ນ ຕ້ອງອາບັຕິປາຈິຕຕີຍ໌.

ບົທວ່າ ນອນ ຄື ນອນເທິງສາດເສື່ອສາດເສື່ອນັ້ນ ຕ້ອງອາບັຕິປາຈິຕຕີຍ໌.

ບົທภาຊນີຍ໌

ຕິກະປາຈິຕຕີຍ໌

[໔໐໗] ບໍ່ໄດ້ບອກເຈົ້າຂອງ ພິກຂຸນີສຳຄັຍວ່າບໍ່ໄດ້ບອກ ປູກໍດີ ໃຫ້ປູກໍດີ ຊຶ່ງສາດເສື່ອ ແລ້ວນັ່ງຫຼືນອນ ຕ້ອງອາບັຕິປາຈິຕຕີຍ໌.

ບໍ່ໄດ້ບອກເຈົ້າຂອງ ພິກຂຸນີສົງສັຍ ປູກໍດີ ໃຫ້ປູກໍດີ ຊຶ່ງສາດເສື່ອ ແລ້ວນັ່ງຫຼືນອນ ຕ້ອງອາບັຕິປາຈິຕຕີຍ໌

ບໍ່ໄດ້ບອກເຈົ້າຂອງ ພິກຂຸນີສຳຄັຍວ່າບອກແລ້ວ ປູກໍດີ ໃຫ້ປູກໍດີ ຊຶ່ງສາດເສື່ອ ແລ້ວນັ່ງຫຼືນອນ ຕ້ອງອາບັຕິປາຈິຕຕີຍ໌.

ທຸກະທຸກກົຜ

ບອກເຈົ້າຂອງແລ້ວ ພິກຂຸນີສໍາຄັນວ່າບໍ່ໄດ້ບອກ ຕ້ອງອາບັຕິທຸກກົຜ.

ບອກເຈົ້າຂອງແລ້ວ ພິກຂຸນີສົງສັຍ ຕ້ອງອາບັຕິທຸກກົຜ.

ບໍ່ຕ້ອງອາບັຕິ

ບອກເຈົ້າຂອງແລ້ວ ພິກຂຸນີສໍາຄັນວ່າບອກແລ້ວ ບໍ່ຕ້ອງອາບັຕິ.

ອນາປັຕຕິວາຣ

[໔໐໗] ພິກຂຸນີບອກເຈົ້າຂອງແລ້ວ ປູກໍດີ ໃຫ້ປູກໍດີ ຊຶ່ງສາດເສື່ອ ແລ້ວນັ່ງຫຼືນອນ ໑ ອາພາຣ ໑ ມີອັນຕຣາຍ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ອັນຮກາຣວັຄຄ໌ ສິກຂາບົທທີ່ ໗ ຈົບ.

ອັນສກາຣວັຄຄ໌ ສິກຂາບົທທີ່ ໗

ເຣື່ອງພິກຂຸນີອັນເຕວາສິນີຂອງພຣະພັທທາກາປິລານີເຖຣີ

[໔໐໙] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓ ພຣະເຊຕວັນອາຣາມຂອງອນາຖບິຓທິກຄຫບໍດີ ເຂຕພຣະນຄຣສາວັຕຖີ ຄັ້ງນັ້ນ ພິກຂຸນີອັນເຕວາສິນີຂອງພຣະພັທທາກາປິລານີເຖຣີ ຍ່ອມຕັ້ງໃຈປຕິບັຕິພຣະພັທທາກາປິລານີເຖຣີໆ ຈຶ່ງໄດ້ກ່າວຄໍານີ້ກັບພິກຂຸນີທັ້ງຫຼາຍວ່າ ຍາແມ່ທັ້ງຫຼາຍ ພິກຂຸນີອົງຄ໌ນີ້ປຕິບັຕິຂ້າພເຈົ້າໂດຍເຄາຣົພ ຂ້າພເຈົ້າຈັກໃຫ້ຈີວຣແກ່ພິກຂຸນີອົງຄ໌ນີ້ ແຕ່ພິກຂຸນີອົງຄ໌ນັ້ນໃຫ້ພິກຂຸນີອື່ນໂພນທະນາໂດຍໃຫ້ເຊື່ອຖືຜິດວ່າ ເຂົ້າໃຈຜິດວ່າ ຍາແມ່ ຂ່າວວ່າ ຂ້ານ້ອຍບໍ່ໄດ້ປຕິບັຕິຍາແມ່ໂດຍເຄາຣົພ ຂ່າວວ່າຍາແມ່ຈັກບໍ່ໃຫ້ຈີວຣແກ່ຂ້ານ້ອຍ ດັ່ງນີ້.

ບັຣດາພິກຂຸນີທີ່ເປັນຜູ້ມັກນ້ອຍ .. ຕ່າງພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸນີຈຶ່ງໄດ້ໃຫ້ພິກຂຸນີອື່ນໂພນທະນາໂດຍໃຫ້ເຊື່ອຖືຜິດ ເຂົ້າໃຈຜິດລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າ ພິກຂຸນີໃຫ້ພິກຂຸນີອື່ນໂພນທະນາ ໂດຍໃຫ້ເຊື່ອຖືຜິດ ເຂົ້າໃຈຜິດ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນຍັຕິສິກຂາບົທ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸນີຈຶ່ງໄດ້ໃຫ້ພິກຂຸນີອື່ນໂພນທະນາໂດຍໃຫ້ເຊື່ອຖືຜິດ ເຂົ້າໃຈຜິດລະ ການກະທໍາຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸນີທັ້ງຫຼາຍຈົ່ງຍົກສິກຂາບົທນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນຍັຕິ

ກ໖. ໗. ອີກຢ່າງ ພິກຂຸນີໃດ ໃຫ້ຄົນອື່ນໂພນທະນາ ໂດຍໃຫ້ເຊື່ອຜິດ ເຂົ້າໃຈຜິດ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸນີອັນເຕວາສິນີຂອງພຣະພັທທາກາປິລານີເຖຣີ ຈົບ.

ສິກຂາບົທວິພັງຄ໌

[໔໑໐] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ภิກຂຸນີ ຄວາມວ່າ ທີ່ຊື່ວ່າ ภิກຂຸນີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ภิກຂຸນີ ທີ່ທຣົງປະສົງຄ໌ໃນອັຖນີ້.

ບົທວ່າ ໂດຍໃຫ້ເຊື່ອຜິດ ຄື ໂດຍໃຫ້ເຊື່ອເປັນຢ່າງອື່ນ.

ບົທວ່າ ເຂົ້າໃຈຜິດ ຄື ໃຫ້ເຂົ້າໃຈເປັນຢ່າງອື່ນ.

ບົທວ່າ ຄົນອື່ນ ໄດ້ແກ່ ອຸປສັມບັນ ໃຫ້ອຸປສັມບັນໂພນທະນາ ຕ້ອງອາບັຕິປາຈິຕຕີຍ໌.

ບົທภາຊນີຍ໌

ຕິກະປາຈິຕຕີຍ໌

[໔໑໑] ອຸປສັມບັນ ภิກຂຸນີສຳຄັນວ່າອຸປສັມບັນ ໃຫ້ໂພນທະນາ ຕ້ອງອາບັຕິປາຈິຕຕີຍ໌.

ອຸປສັມບັນ ภิກຂຸນີສົງສັຍ ໃຫ້ໂພນທະນາ ຕ້ອງອາບັຕິປາຈິຕຕີຍ໌.

ອຸປສັມບັນ ภิກຂຸນີສຳຄັນວ່າ ອນຸປສັມບັນ ໃຫ້ໂພນທະນາ ຕ້ອງອາບັຕິປາຈິຕຕີຍ໌.

ຈຕຸກກະທຸກກົຖ

ภิກຂຸນີໃຫ້ອນຸປສັມບັນໂພນທະນາ ຕ້ອງອາບັຕິທຸກກົຖ.

ອນຸປສັມບັນ ภิກຂຸນີສຳຄັນວ່າອຸປສັມບັນ ຕ້ອງອາບັຕິທຸກກົຖ.

ອນຸປສັມບັນ ภิກຂຸນີສົງສັຍ ຕ້ອງອາບັຕິທຸກກົຖ.

ອນຸປສັມບັນ ภิກຂຸນີສຳຄັນວ່າອນຸປສັມບັນ ຕ້ອງອາບັຕິທຸກກົຖ.

ອນາປັຕຕິວາຣ

[໔໑໘] ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

ອັນธກາຣວັຄຄ໌ ສິກຂາບົທທີ່ ໗ ຈົບ.

ອັນຮການວັດຄ໌ ສິກຂາບົດທີ່ ໗

ເຣື່ອງພິກຂຸຕີຈັດທກາລີ

[໔໑໓] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທຣເຈົ້າປະທັບຢູ່ ຓ ພຣະເຊຕວັນອາຣາມຂອງອນາຖ ບິຕທິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ສັ້ງນັ້ນ ພິກຂຸຕີທັ້ງຫຼາຍຫາບໍຣິຂາຣຂອງຕົນບໍ່ພົບ ຕ່າງກໍຖາມພິກຂຸຕີຈັດທກາລີດັ່ງນີ້ວ່າ ຍາແມ່ ທ່ານເຫັນບໍຣິຂາຣຂອງພວກຂ້ານ້ອຍແດ່ບໍ່?

ພິກຂຸຕີຈັດທກາລີເພ່ງໂທຮ ຕິຕຽນ ໂພນທະນາວ່າ ຂ້າພເຈົ້າຜູ້ດຽວເປັນໂຈຣແນ່ລະ ຂ້າພເຈົ້າຜູ້ດຽວເປັນຄົນບໍ່ລະອາຍແນ່ລະ ເພາະຍາແມ່ພວກທີ່ຫາບໍຣິຂາຣຂອງຕົນບໍ່ພົບ ຕ່າງກໍມາກ່າວຢ່າງນີ້ກັບຂ້າພເຈົ້າວ່າ ຍາແມ່ ທ່ານເຫັນບໍຣິຂາຣຂອງພວກຂ້ານ້ອຍແດ່ບໍ່ ຍາແມ່ທັ້ງຫຼາຍ ຖ້າຂ້າພເຈົ້າຖືເອົາບໍຣິຂາຣຂອງພວກທ່ານໄປ ຂ້າພເຈົ້າກໍບໍ່ແມ່ນສມຕະ ຍ່ອມເຄື່ອນຈາກພຣົຫ໌ມຈັຣຍ໌ ຕ້ອງຕົກນຣົກ ແມ້ຍາແມ່ທີ່ກ່າວຢ່າງນັ້ນກັບຂ້າພເຈົ້າດ້ວຍຄຳບໍ່ແທ້ ກໍຂໍໃຫ້ເປັນບໍ່ແມ່ນສມຕະ ຕ້ອງເຄື່ອນຈາກພຣົຫ໌ມຈັຣຍ໌ຕ້ອງຕົກນຣົກ.

ບັຣດາພິກຂຸຕີທີ່ເປັນຜູ້ມັກນ້ອຍ .. ຕ່າງພາກັນເພ່ງໂທຮ ຕິຕຽນ ໂພນທະນາວ່າ ເປັນຫຍັງຍາແມ່ຈັດທກາລີຈຶ່ງໄດ້ແຊ່ງຕົນແລະຄົນອື່ນດ້ວຍນຣົກແດ່ ດ້ວຍພຣົຫ໌ມຈັຣຍ໌ແດ່ລະ ...

ທຣົງສອບຖາມ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າພິກຂຸຕີຈັດທກາລີແຊ່ງຕົນແລະຄົນອື່ນ ດ້ວຍນຣົກແດ່ ດ້ວຍພຣົຫ໌ມຈັຣຍ໌ແດ່ ແທ້ບໍ່?

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ພຣະພຸທຣເຈົ້າຂ້ານ້ອຍ.

ທຣົງຕິຕຽນແລ້ວບັນຍັຕິສິກຂາບົດ

ພຣະຜູ້ມີພຣະພາຄພຸທຣເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫຼາຍ ເປັນຫຍັງພິກຂຸຕີຈັດທກາລີຈຶ່ງໄດ້ແຊ່ງຕົນແລະຄົນອື່ນ ດ້ວຍນຣົກແດ່ ດ້ວຍພຣົຫ໌ມຈັຣຍ໌ແດ່ລະ ການກະທຳຂອງນາງນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ...

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸຕີທັ້ງຫຼາຍຈົ່ງຍົກສິກຂາບົດນີ້ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

ພຣະບັນຍັຕິ

໑໔. ໗. ອີກຢ່າງ ພິກຂຸຕີໃດ ແຊ່ງຕົນກໍດີ ຕົນອື່ນກໍດີ ດ້ວຍນຣົກ ຫຼືດ້ວຍພຣົຫ໌ມຈັຣຍ໌ ເປັນປາຈິຕຕີຍ໌.

ເຣື່ອງພິກຂຸຕີຈັດທກາລີ ຈົບ.

ສິກຂາບົທວິພັງຄ໌

[໔໑໘] ບົທວ່າ ອີກຢ່າງ .. ໃດ ຄວາມວ່າ ຜູ້ໃດ ຄື ຜູ້ເຊັ່ນໃດ ...

ບົທວ່າ ພິກຂຸຕີ ຄວາມວ່າ ທີ່ຊື່ວ່າ ພິກຂຸຕີ ເພາະອັຖວ່າເປັນຜູ້ຂໍ .. ນີ້ຊື່ວ່າ ພິກຂຸຕີ ທີ່ທຮົງປະສົງຄ໌ໃນອັຖນີ້.

ບົທວ່າ ຕົນ ຄື ຕົວຂອງຕົວເອງ.

ບົທວ່າ ຄົນອື່ນ ໄດ້ແກ່ ອຸປສັມບັນ ແຊ່ງ ດ້ວຍຄຳວ່ານຣົກກໍດີ ດ້ວຍຄຳວ່າ ພຣົຫ໌ມຈັຣຍ໌ກໍດີ ຕ້ອງອາບັຕິປາຈິຕຕີຍ໌.

ບົທພາຊນີຍ໌

ຕິກະປາຈິຕຕີຍ໌

[໔໑໕] ອຸປສັມບັນ ພິກຂຸຕີສຳຄັນວ່າອຸປສັມບັນ ແຊ່ງດ້ວຍນຣົກກໍດີ ດ້ວຍພຣົຫ໌ມຈັຣຍ໌ກໍດີ ຕ້ອງອາບັຕິປາຈິຕຕີຍ໌.

ອຸປສັມບັນ ພິກຂຸຕີສົງສັຍ ແຊ່ງດ້ວຍນຣົກກໍດີ ດ້ວຍພຣົຫ໌ມຈັຣຍ໌ກໍດີ ດ້ວຍພຣົຫ໌ມຈັຣຍ໌ກໍດີ ຕ້ອງອາບັຕິປາຈິຕຕີຍ໌.

ອຸປສັມບັນ ພິກຂຸຕີສຳຄັນວ່າອນຸປສັມບັນ ແຊ່ງດ້ວຍນຣົກກໍດີ ດ້ວຍພຣົຫ໌ມຈັຣຍ໌ກໍດີ ຕ້ອງອາບັຕິປາຈິຕຕີຍ໌.

ປັຓຈກະທຸກກົຏ

ພິກຂຸຕີແຊ່ງດ້ວຍຄຳວ່າກຳເນີດສັຕວ໌ດິຣັຈຉານກໍດີ ດ້ວຍຄຳວ່າເປຕວິສັຍກໍດີ ດ້ວຍຄຳວ່າເປັນຄົນໂຊຄຮ້າຍກໍດີ ຕ້ອງອາບັຕິທຸກກົຏ.

ແຊ່ງອນຸປສັມບັນ ຕ້ອງອາບັຕິທຸກກົຏ.

ອນຸປສັມບັນ ພິກຂຸຕີສຳຄັນວ່າອຸປສັມບັນ ຕ້ອງອາບັຕິທຸກກົຏ.

ອນຸປສັມບັນ ພິກຂຸຕີສົງສັຍ ຕ້ອງອາບັຕິທຸກກົຏ.

ອນຸປສັມບັນ ພິກຂຸຕີສຳຄັນວ່າອນຸປສັມບັນ ຕ້ອງອາບັຕິທຸກກົຏ.

ອນາປັຕຕິວາຣ

[໔໑໖] ມຸ່ງອັຖ ໑ ມຸ່ງທັມມ໌ ໑ ມຸ່ງສັ່ງສອນ ໑ ວິກົລຈຣິຕ ໑ ອາທິກັມມິກາ ໑ ບໍ່ຕ້ອງອາບັຕິແລ.

